# ສາລະບານ


ສາລະບານ ........ I

ບົດນຳ ........ 1

1. ເປັນຫຍັງຈິ່ງເຮັດການສຳຫຼວດສະພາບກຳລັງແຮງງານ ແລະການນຳໃຊ້ແຮງງານເດັກຢູ່ ສປປລາວ 2

2. ຈຸດປະສົງ ແລະເປົ້າໝາຍ ຂອງການສຳຫຼວດ ........ 3

3. ໜ້າທີ່ ຂອງນັກເດີນສຳຫຼວດ........ 4

4. ຂໍ້ແນະນຳທົ່ວໄປ ........ 6

5. ແນວຄວາມຄິດ ແລະນິຍາມ ........ 8

6. ໜ້າທີ່ກ່ອນການເດີນສຳຫຼວດ ........ 11

7. ວິທີການຄັດເລືອກຄົວເຮືອນຕົວແທນ ........ 12

ຂໍ້ມູນກ່ຽວກັບຄົວເຮືອນ ........ 16

ພາກທີ I: ຂໍ້ມູນກ່ຽວກັບສະມາຊິກຄົວເຮືອນໝົດທຸກຄົນ ........ 17

ພາກທີ II: ການສຶກສາສຳລັບສະມາຊິກຄົວເຮືອນທີ່ມີອາຍຸ 5 ປີຂຶ້ນໄປ. ........ 20

ພາກທີ III: ສະຖານະພາບ ທາງດ້ານເສດຖະກິດ ຂອງສະມາຊິກຄົວເຮືອນທີ່ມີ ອາຍຸ 5 ປີຂຶ້ນ ໄປ (ໃນ 7 ມື້ຜ່ານມາ). ........ 24

ພາກທີ IV: ສະຖານະພາບຂອງແຮງງານປົກກະຕິ *(ສຳລັບອາຍຸ 5 ປີ ຂຶ້ນໄປ)*........ 30

ພາກທີ V.1: ການວ່າງງານ........ 30

ພາກທີ V.2: ການເຮັດວຽກເພີ້ມ ........ 31

ພາກທີ VI: ບັນດາວຽກເຮືອນການຊານຕ່າງໆ ສຳລັບຜູ້ມີອາຍຸ 5 ປີຂຶ້ນໄປ. ........ 31

ພາກທີ VII: ບັນຫາທາງດ້ານສຸກຂະພາບ ແລະ ຄວາມປອດໄພ ໃນການເຮັດວຽກສຳລັບຜູ້ທີ່ມີອາຍຸ ແຕ່ 5 ປີ ຂຶ້ນໄປ *(ສຳລັບວຽກເສດຖະກິດ)* ........ 32

ພາກທີ VIII: ປະກັນສັງຄົມ (ສຳລັບຜູ້ທີ່ມີອາຍຸ 14 ປີຂຶ້ນໄປ)........ 35

ພາກທີ IX: ຄຸນລັກສະນະຂອງຄົວເຮືອນ........ 37

ພາກທີ XI : ຮູບແບບຂອງການເຄື່ອນຍ້າຍແຮງງານ *(ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 25 ປີ)*........ 44

ເອກະສານຊ້ອນທ້າຍ........ 49

1. ລະຫັດສາລະບານ ISIC ........ 49

2. ລະຫັດສາລະບານ ISCO ........ 49

3. ລະຫັດປະເທດ ........ 49

# ບົດນຳ

ປະຕິບັດຕາມຂໍ້ຕົກລົງ ຂອງຫ້ອງການເລຂານາຍົກລັດຖະມົນຕີ ສະບັບເລກທີ 2253/ຄລບ ລົງວັນທີ 08 / 12 / 2009, ກ່ຽວກັບການຮັບເອົາການສຳຫຼວດກຳລັງແຮງງານ ແລະ ການນຳໃຊ້ແຮງງານເດັກ ຢູ່ ສປປລໃນປີ 2010, ເພື່ອເກັບກຳສະພາບການນຳໃຊ້ກຳລັງແຮງງານ, ການເຄື່ອນຍ້າຍແຮງງານຈາກຊົນນະບົດສູ່ຕົວເມືອງ, ການນຳໃຊ້ແຮງງານເດັກ ທີ່ສາມາດເປັນຂໍ້ມູນພື້ນຖານໃຫ້ແກ່ການ ວາງນະໂຍບາຍຕ່າງໆ ຂອງກຸ່ມແຮງງານໃນແຕ່ລະຂະແໜງເສດຖະກິດ.

ປື້ມຄູ່ມືນັກເດີນສຳຫຼວດສະບັບນີ້ ແມ່ນເອກກະສານອັນນຶ່ງທີ່ສຳຄັນສຳລັບ, ນັກເດີນສຳຫຼວດຈະຕ້ອງເກັບຮັກສາໄວ້ນຳຕົນຕະຫລອດເວລາການເດີນສຳຫຼວດ, ຊຶ່ງມັນຈະຊ່ວຍທ່ານ ໃນເວລາພົບອຸປະສັກ ຫຼືມີບັນຫາກ່ຽວກັບການກຳນົດຂອບເຂດ, ເປົ້າໝາຍ, ຈຸດປະສົງ, ເນື້ອໃນ, ນິຍາມ ແລະວິທີການຈົດກ່າຍຂອງແຕ່ລະຄຳຖາມ.

ຂັ້ນຕອນຕ່າງໆ ໃນການປະຕິບັດການສຳຫຼວດນີ້ ແມ່ນໄດ້ວາງໄວ້ເປັນລະບົບສົມຄວນພ້ອມ ທັງບັນດາລະຫັດສາລະບານຕ່າງໆທີ່ຈຳເປັນທີ່ຈະໃຊ້ແມ່ນໄດ້ກຳນົດໄວ້ໃນປື້ມຄູ່ມືນີ້ ບັນດາທ່ານນັກເດີນສຳຫຼວດຈະຕ້ອງທຳຄວາມເຂົ້າໃຈ ໃຫ້ແຈ້ງກ່ຽວກັບພາລະບົດບາດຂອງຕົນ ແລະ ຕ້ອງປະຕິບັດຕາມຂໍ້ແນະນຳຕ່າງໆ ທີ່ໄດ້ລະບຸໄວ້ໃນປື້ມນີ້ ຖ້າບໍ່ແນ່ໃຈ ຕ້ອງແຈ້ງໃຫ້ນັກກວດກາຂອງທ່ານຮູ້ທັນທີ ຫ້າມບໍ່ໃຫ້ແກ້ໃຂ ຫຼືດັດແປງ ຫຼື ເຮັດຕາມຄວາມເຂົ້າໃຈຕົນເອງເດັດຂາດ.

ຜົນສຳເລັດໃນການປະຕິບັດ ການສຳຫຼວດຄັ້ງນີ້ ແມ່ນຂື້ນກັບການປະຕິບັດວຽກງານຕົວຈິງຂອງທ່ານ. ສະນັ້ນຄວາມເຂົ້າໃຈເລິກເຊິ່ງ ແລະການປະຕິບັດຕາມການແນະນຳຈາກການຝຶກອົບຮົມ ກໍ່ຄືໃນປື້ມຄູ່ມືນີ້ ຢ່າງເຄັ່ງຄັດຂອງທ່ານ ຈຶ່ງແມ່ນເງື່ອນໃຂອັນສຳຄັນ ໃນການຮັບປະກັນຄຸນນະພາບ ແລະຖານທີ່ດີສະໜອງໃຫ້ແກ່ຜູ້ວາງນະໂຍບາຍໄດ້.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ທຸກທ່ານ ຄົງຈະເຂົ້າໃຈເຖິງຄວາມສຳຄັນ ຂອງວຽກງານທີ່ທ່ານພວມປະຕິບັດຢູ່ນີ້ ແລະຂໍອວຍພອນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະໄດ້ຮັບໄຊຊະນະໃນວຽກນີ້ຢ່າງສົມບູນ.

ຫົວໜ້າກົມສະຖິຕິ

## 1. <u>ເປັນຫຍັງຈຶ່ງເຮັດການສຳຫຼວດສະພາບກຳລັງແຮງງານ ແລະການນຳໃຊ້ແຮງງານເດັກຢູ່ ສປປລາວ</u>

ໄລຍະຜ່ານມາ ຂໍ້ມູນດ້ານແຮງງານ ແມ່ນໄດ້ຄາດຄະເນຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ, ນອກຈາກນັ້ນກໍ່ຄາດຄະເນຈາກການສຳຫຼວດການຊົມໃຊ້ ແລະການໃຊ້ຈ່າຍຂອງຄົວເຮືອນ, ເຊິ່ງການຄາດຄະເນກຳລັງແຮງງານດັ່ງກ່າວ ແມ່ນມີຫລາຍດັດສະນີໝາຍທີ່ກ່ຽວຂ້ອງ ແມ່ນບໍ່ສາມາດຄາດຄະເນໄດ້. ຈາກສະພາບດັ່ງກ່າວ ໃນວັນທີ 25 ເດືອນ ທັນວາ ປີ 2009, ນາຍົກລັດຖະມົນຕີ ຈຶ່ງໄດ້ຕົກລົງໃຫ້ຈັດຕັ້ງປະຕິບັດການສຳຫຼວດກຳລັງແຮງງານ ແລະການນຳໃຊ້ແຮງງານເດັກຂອງ ສປປ ລາວ ໃນປີ 2010. ການສຳຫຼວດນີ້ ແມ່ນສາມາດຄາດຄະເນກຳລັງແຮງງານຢູ່ໃນລະດັບແຂວງໄດ້. ຈຳນວນບ້ານໃນເປົ້າໝາຍການສຳຫຼວດຄັ້ງນີ້ ມີ 540 ບ້ານ 10,800 ຄົວເຮືອນ(ບ້ານລະ 20 ຄົວເຮືອນ) ເຊິ່ງຈະກວມເອົາທຸກແຂວງໃນຂອບເຂດທົ່ວປະເທດ.

ສະນັ້ນ, ພວກເຮົາບໍ່ສາມາດມີຂໍ້ມູນຂ່າວສານພຽງພໍ ເພື່ອຮັບໃຊ້ໃນການວາງນະໂຍບາຍ ແລະ ສ້າງແຜນກຳນົດຫລັກການ, ລະບຽບການ ແລະມາດຕະການຄຸ້ມຄອງແຮງງານ, ການສ້າງ ແລະພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳ ແລະການນຳໃຊ້ແຮງງານ ເພື່ອດັດສົມສາຍພົວພັນກຳລັງແຮງງານ ກັບການຜະລິດ, ຍົກສູງຄຸນນະພາບຜະລິດຕະພັນໃນທົ່ວສັງຄົມ. ເຖິງແມ່ນວ່າ ໃນໄລຍະຜ່ານມາ ພວກເຮົາໄດ້ເຮັດ ການສຳຫຼວດພົນລະເມືອງມາແລ້ວ 3 ຄັ້ງ, ແຕ່ຂໍ້ມູນດ້ານ ກຳລັງແຮງງານທີ່ລະອຽດກໍ່ບໍ່ສາມາດສະແດງ ອອກໄດ້ຢ່າງຄົບຖ້ວນ.

ເຫດຜົນທີ່ຈຳເປັນຕ້ອງດຳເນີນການສຳຫຼວດກຳລັງແຮງງານ ແລະການນຳໃຊ້ແຮງງານເດັກຢູ່ ສປປ ລາວ ແມ່ນ:

- ເນື່ອງຈາກ ສປປ ລາວ ມີຂໍ້ມູນກ່ຽວກັບສະພາບກຳລັງແຮງງານໂດຍລວມ ແມ່ນມີຈຳກັດ ແລະຂໍ້ມູນແຮງງານເດັກກໍ່ເຊັ່ນດຽວກັນ. ສະນັ້ນ, ເພື່ອສະໜອງຂໍ້ມູນດັ່ງກ່າວ ໃຫ້ແກ່ພັກ ແລະລັດຖະບານ ເປັນບ່ອນອີງອັນໜຶ່ງ ໃຫ້ແກ່ການວາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແກ້ໄຂບັນຫາດ້ານແຮງງານເວົ້າລວມ ແລະເວົ້າສະເພາະແຮງງານເດັກໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.
- ເນື່ອງຈາກວ່າ ສປປ ລາວ ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາຂອງອົງການແຮງງານສາກົນເລກທີ 182 ວ່າດ້ວຍ ການຫ້າມ ແລະດຳເນີນການໂດຍທັນທີເພື່ອລົບລ້າງການນຳໃຊ້ແຮງງານເດັກທີ່ທ່າລຸນທີ່ສຸດ, ເລກທີ 138 ວ່າດ້ວຍເກນອາຍຸຂັ້ນຕ່ຳໃນການເຮັດວຽກ ຊຶ່ງໄດ້ໃຫ້ສັດຕະຍາບັນ ໃນປີ 2005.
- ສປປ ລາວ ໄດ້ປັບປຸງກົດໝາຍແຮງງານໃນປີ 2006 ຊຶ່ງໄດ້ລະບຸການນຳໃຊ້ແຮງງານເດັກໄວ້ໃນໝວດທີ IV ມາດຕາ 41 ກ່ຽວກັບການຮັບເອົາແຮງງານເດັກ. ເພື່ອເປັນການຕິດຕາມ ແລະຢັ້ງຢືນກ່ຽວກັບການນຳໃຊ້ແຮງງານເດັກຢ່າງຖືກຕ້ອງ ມັນຈຳເປັນຕ້ອງໄດ້ເກັບກຳຂໍ້ມູນ ໂດຍການດຳເນີນການສຳຫຼວດ.

- ພັນທະຂອງບັນດາປະເທດສະມາຊິກພາຍຫລັງການໃຫ້ສັດຕະຍາບັນສອງປີ ຕ້ອງໄດ້ສ້າງບົດລາຍງານ ການຈັດຕັ້ງປະຕິບັດຕໍ່ສົນທິສັນຍາດັ່ງກ່າວ ຊຶ່ງ ສປປ ລາວ ກໍໄດ້ສ້າງບົດລາຍງານ ໃນປີ 2007 ເພື່ອອະທິບາຍກ່ຽວກັບການນຳໃຊ້ແຮງງານເດັກແບບທາລຸນທີ່ສຸດຢູ່ ສປປ ລາວ, ແຕ່ແນວໃດກໍຕາມ ຂໍ້ມູນທີ່ລາຍງານໄປກໍ່ຍັງບໍ່ມີຄຳຕອບທີ່ຊັດເຈນ ເນື່ອງຈາກຂາດຂໍ້ມູນທີ່ຈຳເປັນ ຊຶ່ງກະຊວງ ແຮງງານ ແລະສະຫວັດດີການສັງຄົມ ໄດ້ສະເໜີ ໄປຍັງອົງການແຮງງານເພື່ອຂໍການຊ່ວຍເຫຼືອດັ່ງກ່າວ.
- ໃນການສຳຫຼວດຄັ້ງນີ້ ກໍ່ເພື່ອເປັນການຢັ້ງຢືນ ແລະຢືນຢັນວ່າ ສປປ ລາວ ບໍ່ໄດ້ມີການນຳໃຊ້ແຮງງານເດັກຕາມມາດຕາ 3 ແລະ 4 ຂອງສົນທິສັນຍາແຮງງານ ເລກທີ 182.

ລັດຖະບານລາວເຫັນໄດ້ບົດບາດ ແລະຄວາມສຳຄັນ ຂອງກຳລັງແຮງງານໃນການມີສ່ວນຮ່ວມເພື່ອປະກອບເຂົ້າໃນການດຳເນີນບັນດາກິດຈະກຳດ້ານເສດຖະກິດ ຂອງຊາດໃຫ້ເຂັ້ມແຂງ ແລະຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ສະນັ້ນລັດຖະບານ ໄດ້ຮ່ວມມືກັບອົງຈັດຕັ້ງແຮງງານສາກົນ ( ILO) ເພື່ອຂອກຫາທ່າແຮງ ແລະສະໜັບສະໜູນດ້ານທຶນຮອນ ແລະເຕັກນິກ ເພື່ອເກັບກຳຂໍ້ມູນດ້ານກຳລັງແຮງງານ ແລະການນຳໃຊ້ແຮງງານເດັກ ຢູ່ ສປປລາວ ເປັນຄັ້ງທຳອິດ.

ລັດຖະບານ ໄດ້ຕົກລົງຮັບຮອງ ແລະເຫັນດີເຮັດການສຳຫຼວດ ສະພາບແຮງງານຢູ່ ປປລາວ, ເລກທີ 2253/ຄລບ, ວັນທີ 08/12/2009 ເຮັດການສຳຫຼວດສະພາບແຮງງານ ແລະການນຳໃຊ້ແຮງງານເດັກ ຢູ່ ສປປລາວ, ຈຸດປະສົງ ຂອງການສຳຫຼວດຄັ້ງນີ້ ແມ່ນເພື່ອເກັບກຳບັນດາຂໍ້ມູນກ່ຽວກັບກຳລັງແຮງງານ ແລະການນຳໃຊ້ແຮງງານເດັກໄດ້ຢ່າງຄົບຖ້ວນ ແລະຊັດເຈນ, ສະໜອງຂໍ້ມູນຂ່າວສານທີ່ລະອຽດ ແລະ ທັນເວລາ ແລະມັນມີຄວາມສຳຄັນເປັນຢ່າງຍິ່ງ ຕໍ່ການວາງແຜນ ແລະສ້າງນະໂຍບາຍດ້ານແຮງງານ ແລະ ການພັດທະນາ ຊັບພະຍາກອນມະນຸດ, ການພັດທະນາ ແລະສະຫວັດດີພາບ ຂອງຄົນໃນສັງຄົມນັ້ນ.

ໄລຍະເວລາການສຳຫຼວດສະພາບກຳລັງແຮງງານ ແລະການນຳໃຊ້ແຮງງານເດັກໃນປີ 2010 ຈະໄດ້ດຳເນີນປະຕິບັດຢູ່ໃນເດືອນ 10/ 2010 ຊຶ່ງເປັນເວລານັດໝາຍການສຳຫຼວດ ແລະມັນກໍ່ສອດຄ່ອງກັບ ການ ວາງແນວທາງນະໂຍບາຍຂອງພັກ ແລະການວາງແຜນການເສດຖະກິດ-ສັງຄົມ ຂອງລັດ. ການສຳຫຼວດກຳລັງແຮງງານ ແລະການນຳໃຊ້ແຮງງານເດັກ ຢູ ສປປລາວ ຄາດວ່າຈະສຳຫຼວດທຸກໆ 10 ປີ, ເພື່ອຄົ້ນຄ້ວາ,ສຶກສາ ຕີລາຄາການປ່ຽນແປງສະພາບຂໍ້ມູນ ຂອງກຳລັງແຮງງານ ແລະການນຳໃຊ້ແຮງງານເດັກໃນແຕ່ລະໄລຍະ.

## 2. ຈຸດປະສົງ ແລະເປົ້າໝາຍ ຂອງການສຳຫຼວດ

ເພື່ອສົ່ງເສີມເງື່ອນໄຂ ທີ່ສາມາດເຮັດໃຫ້ລັດຖະບານອອກລະບຽບການ, ກຳຈັດ ແລະເກືອດຫ້າມການນຳໃຊ້ແຮງງານເດັກ ແລະກຳລັງແຮງງານທີ່ບໍ່ຖືກຕ້ອງຕາມກົດໝາຍ. ມີຂໍ້ມູນອ້າງອີງສະພາບ

ຕົວຈິງ ເພື່ອສາມາດວາງມາດຕາການ ແລະສະກັດກັ້ນການນຳໃຊ້ແຮງງານເດັກ ແລະກຳລັງແຮງງານທີ່ບໍ່ຖືກຕ້ອງຕາມກົດໝາຍຢູ່ ສປປລາວ.

ເປົ້າໝາຍ ຂອງການສຳຫຼວດ ແມ່ນບັນດາຄົວເຮືອນສ່ວນບຸກຄົນ ເພື່ອເກັບກຳຂໍ້ມູນຄຸນລັກສະນະ ຂອງກຳລັງແຮງງານ ແລະການນຳໃຊ້ແຮງງານເດັກ. ການສຳຫຼວດນີ້ ເປັນການສຳຫຼວດແບບຕົວແທນ, ຂະໜາດຕົວແທນທັງໝົດ 11,100 ຄົວເຮືອນ, ເຂດສຳຫຼວດທັງໝົດ 540 ບ້ານຊຶ່ງກະຈາຍຢູ່ເຂດຕົວເມືອງ, ຊົນນະບົດ ຂອງບັນດາແຂວງໃນຂອບເຂດທົ່ວປະເທດ.

## 3. ໜ້າທີ່ ຂອງນັກເດີນສຳຫຼວດ

ຄຸນນະພາບຂອງຂໍ້ມູນທີ່ໄດ້ມາຈາກການສຳຫຼວດວດສະພາບກຳລັງແຮງງານ ແລະການນຳໃຊ້ແຮງງານເດັກ ຢູ່ສປປລາວ ແມ່ນຂຶ້ນກັບນັກເດີນສຳຫຼວດເປັນສ່ວນໃຫຍ່ ໃນການກວດກາ ແລະ ຕັດສິນເຖິງ ຜົນໄດ້ຮັບ. ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫຼວດ ແລະ ນັກກວດກາ ຈະຕ້ອງເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດຕາມຄຳແນະນຳໃນປຶ້ມຄູ່ມືນີ້ ແລະ ນຳໃຊ້ຄຳນິຍາມ ຂອງແນວຄວາມຄິດ ຫຼື ຄວາມຫມາຍຕ່າງໆ ທີ່ໃຊ້ໃນການສຳຫຼວດກຳລັງແຮງງານ ແລະການນຳໃຊ້ແຮງງານເດັກໃນຄັ້ງນີ້.

ຈາກບັນຫາຂ້າງເທີງນີ້ ນັກເດີນສຳຫຼວດຜູ້ໜຶ່ງ ແມ່ນມີຫລາຍໜ້າທີ່ ແລະມີຫລາຍໜ້າວຽກຈະຕ້ອງເຮັດ ໃນທຸກໆຂັ້ນຕອນ ຂອງການສຳຫຼວດໂດຍໄດ້ແບ່ງອອກເປັນ 3 ໄລຍະຕົ້ນຕໍ ຄື: ໄລຍະກ່ອນການເດີນສຳຫຼວດ, ໃນໄລຍະເວລາການ ເດີນສຳຫຼວດ ແລະຫລັງການເດີນສຳຫຼວດ.

## 3.1 ໜ້າທີ່ກ່ອນການເດີນສຳຫຼວດ

- ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບການຈົດກ່າຍແບບສອບຖາມຕະຫລອດໄລຍະ ຂອງການຝຶກອົບ ຮົມ.
- ລົມທົບກັບນາຍບ້ານ ຫຼືອຳນາດການປົກຄອງຂອງບ້ານເພື່ອຂຶ້ນບັນຊີຄົວເຮືອນ, ຄັດເລືອກຄົວເຮືອນຕົວແທນ.
- ສ້າງແຜນການເດີນສຳຫຼວດ, ສຳພາດຮ່ວມກັບຄົວເຮືອນ.
- ກຳນົດເຂດສຳຫຼວດ ແລະ ຖ້າຫາກວ່າ ບ້ານນັ້ນຖືກແບ່ງເປັນຫລາຍເຂດຍ່ອຍ (ໂຮມບ້ານເຂົ້າກັນ) ຫຼືແຍກຈຸດບ້ານຢູ່ແຕ່ລະຈຸດ, ໃຫ້ເຮັດວຽກຮ່ວມກັບນາຍບ້ານ ແລະກຳນົດເຂດໃຫ້ຈະແຈ້ງ (ໃນກໍລະນີບ້ານໜຶ່ງ ຖືກໂຮມ ຫຼືແບ່ງກັນຢູ່ເປັນຫລາຍຈຸດ)
- ເອົາໃຈໃສ່ຕໍ່ການກະກຽມເອກະສານ ພ້ອມທັງອຸປະກອນຕ່າງໆ ຂອງການສຳຫຼວດ.
- ສະເຫນີຕົວ ຂອງທ່ານຢູ່ບ່ອນທີ່ທ່ານ ຈະປະຕິບັດການສຳພາດ.
- ນັດພົບກັບບັນດາຄົວເຮືອນໃນເຂດສຳຫຼວດທີ່ທ່ານຮັບຜິດຊອບ.
- ຂຽນຂໍ້ມູນທີ່ຕັ້ງ ຂອງບ້ານ (ແຂວງ, ເມືອງ, ບ້ານ, ເຂດສຳຫຼວດ) ທີ່ທ່ານປະຕິບັດການສຳຫຼວດໃສ່ໃນໜ້າປົກ ຂອງປຶ້ມແບບສອບຖາມ.

## 3.2. ໜ້າທີ່ໃນໄລຍະເວລາ ຂອງການເດີນສຳຫຼວດ

- ສະເໜີຈຸດປະສົງ, ຂອບເຂດເປົ້າໝາຍຂອງການສຳຫຼວດ, ຄວາມຈຳເປັນ ແລະຕ້ອງການຂອງການການສຳຫຼວດ
- ຖາມບັນດາຄຳຖາມ ແລະ ຈົດບັນດາຄຳຕອບ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ຊັດເຈນ.
- ກວດກາຄືນແຕ່ລະໃບແບບສອບຖາມ ເພື່ອເບິ່ງຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງກັນລະຫວ່າງຄຳຖາມຕ່າງໆ ກ່ອນຈະໄປສຳພາດຄົວເຮືອນຕໍ່ໄປ.
- ຮັບປະກັນວ່າ ທ່ານໄດ້ສຳພາດທຸກໆຄົວເຮືອນ ທີ່ເປັນເປົ້າໝາຍການສຳຫຼວດ
- ໃຫ້ໝາຍຄົວເຮືອນທີ່ທ່ານໄປຫາໃນເວລາສຳພາດ ແຕ່ບໍ່ມີໃຜຢູ່ເຮືອນ ຫຼື ບໍ່ມີຜູ້ສາມາດໃຫ້ຄຳຕອບໄດ້ ຫລັງຈາກນັ້ນໃຫ້ນັດພົບກັບຄົວເຮືອນ ເພື່ອຄືນໄປສຳພາດອີກໃໝ່.

ໃນບັນດາວຽກງານເຫລົ່ານີ້, ໜ້າທີ່ສຳຄັນກ່ວາໝູ່ຂອງການສຳຫຼວດ ຈະຕ້ອງສຳພາດຢ່າງລະອຽດ ແລະ ຈົດກ່າຍໃຫ້ຖືກຕ້ອງ, ຈະຕ້ອງໃຊ້ທຸກຄວາມພະຍາຍາມ ເພື່ອໃຫ້ໄດ້ຄຳຕອບທີ່ຄົບຖ້ວນ, ຊັດເຈນ ແລະ ສະອາດ.

## 3.3. ໜ້າທີ່ພາຍຫລັງການເດີນສຳຫຼວດ

- ອ່ານຄືນຄຳຕອບໃຫ້ຜູ້ຖືກສຳພາດຟັງ ເພື່ອຢັ້ງຢືນຄຳຕອບສຸດທ້າຍ
- ກວດກາ ແລະສັງລວມບັນດາແບບສອບຖາມ, ເນື້ອໃນບັນດາຄຳຖາມ ແລະຄຳຕອບໃຫ້ຮຽບຮ້ອຍ ແລ້ວມັດ ຫຼື ຫໍ່ໃສ່ແກັດໄວ້ ເພື່ອລຶກລ້ຽງບໍ່ໃຫ້ເອກະສານຖືກເສຍຫາຍໃນເວລາມີການຂົນສົ່ງ.
- ສົ່ງມອບແບບສອບຖາມທັງໝົດ ທີ່ໃຊ້ແລ້ວ ແລະ ບໍ່ທັນໃຊ້ ຄືນໃຫ້ແກ່ພະນັກງານຮັບຜິດຊອບ ຫຼື ນັກກວດກາທີ່ກ່ຽວຂ້ອງ (ປຶ້ມແບບສອບຖາມທີ່ໃຊ້ແລ້ວ ແຕ່ຜິດພາດ (ຂຽນຜິດ) ກໍ່ຕ້ອງສົ່ງຄືນໃຫ້ ຄົບຕາມຈຳນວນທັງໝົດ ທີ່ໄດ້ມອບໃຫ້).
- ແຈ້ງໃຫ້ຊາບກ່ຽວກັບທຸກໆບັນຫາທີ່ກ່ຽວຂ້ອງ ຫຼື ຂໍ້ສັງເກດການຕ່າງໆ ໃຫ້ແກ່ນັກກວດກາຮູ້, ໂດຍ ສະເພາະ ແມ່ນບັນຫາທີ່ບໍ່ໄດ້ຂຽນໃສ່ໃນບົດລາຍງານ ຂອງການປະຕິບັດການສຳຫຼວດຂອງຕົນ.

## 3.4. ສະຖານທີ່ເຮັດວຽກ

ຫ້ອງການສຳຫຼວດແຮງງານ ແລະການນຳໃຊ້ແຮງງານເດັກຂອງແຂວງ ໄດ້ຖືກກຳນົດເອົາ ພະແນກແຜນການ ແລະການລົງທຶນແຂວງ, ໂດຍແມ່ນຂະແໜງສະຖິຕິ ມີພະນັກງານຮັບຜິດຊອບ ການສຳຫຼວດຂອງແຂວງ. ນັກເດີນສຳຫຼວດຈະໃຊ້ເວລາສ່ວນໃຫຍ່ໃນພາກສະໜາມ, ນັກເດີນສຳຫຼວດ ຄົນໜຶ່ງຈະຖືກຮັບຜິດຊອບເຂດເດີນສຳຫຼວດແຕ່ 1 - 2 ເຂດສຳຫຼວດ ແລະຕ້ອງໄປຫາບ້ານເປົ້າໝາຍຕາມເວລາທີ່ມງານກຳນົດ ເພື່ອຈະໄດ້ຂຶ້ນບັນຊີຄົວເຮືອນທັງໝົດທີ່ຢູ່ເປັນປະຈຳໃນບ້ານ ພ້ອມຄັດເລືອກຄົວເຮືອນຕົວແທນຈາກບັນຊີດັ່ງກ່າວ ເພື່ອຈະໄດ້ນັດພົບສຳພາດທຸກໆຄົວເຮືອນ. ພ້ອມກັນນັ້ນ ການຈົດກ່າຍຂໍ້ມູນກ່ຽວ ກັບທຸກຄົນ ທີ່ເປັນສະມາຊິກຂອງຄົວເຮືອນ ແມ່ນໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ສະອາດຈະແຈ້ງ.

## 3.5. ການຝຶກອົບຮົມນັກເດີນສຳຫຼວດ

ນັກເດີນສຳຫຼວດທີ່ດີໄດ້ ກໍ່ຕໍ່ເມື່ອໄດ້ຜ່ານການຝຶກອົບຮົມ ແລະຜ່ານປະສົບການຕົວຈິງມາກ່ອນ. ການ ຝຶກອົບຮົມຈະປະກອບດ້ວຍການຝຶກອົບຮົມໃນຫ້ອງຮຽນ ແລະການປະຕິບັດຕົວຈິງໃນພາກສະໜາມ. ກ່ອນຈະຂຶ້ນຫ້ອງຮຽນແຕ່ລະຄັ້ງ ທ່ານຈະຕ້ອງອ່ານປຶ້ມຄູ່ມືນີ້ໄປພ້ອມໆ ກັນກັບແບບສອບຖາມຢ່າງເອົາ ໃຈໃສ່ ແລະ ຈົດຄຳຖາມທີ່ທ່ານຢາກຈະຖາມໄວ້, ທ່ານສາມາດຖາມຄຳຖາມໄດ້ທຸກເວລາເພື່ອຫຼີກເວັ້ນ ການເຮັດ ຜິດພາດໃນເວລາເຮັດຕົວຈິງ.

## 3.6. ການກວດກາ ແລະການຕິດຕາມສະໜັບສະໜູນ

ໃນພາກສະໜາມ ທ່ານຈະໄດ້ປະຕິບັດການສຳຫຼວດຕົວຈິງ, ຈະມີນັກກວດກາ ລົງຕິດຕາມໃນເວລາທ່ານປະຕິບັດການສຳຫຼວດ, ຊຶ່ງແມ່ນຜູ້ທີ່ຈະກວດກາປຶ້ມແບບສອບຖາມ ທີ່ທ່ານຈົດກ່າຍສຳເລັດແລ້ວ, ເພື່ອກວດເບິ່ງຄືນຄວາມຄົບຖ້ວນ, ຖືກຕ້ອງ ແລະກວດແກ້ຄວາມຜິດ ໃນການຈົດກ່າຍຂອງທ່ານ.

# 4. <u>ຂໍ້ແນະນຳທົ່ວໄປ</u>

ການສຳພາດທີ່ມີຜົນສຳເລັດ ແມ່ນສິນລະປະອັນໜຶ່ງ ແລະ ມັນບໍ່ແມ່ນກົນຈັກ, ເຖິງແມ່ນວ່າ ສິນລະປະຂອງການສຳພາດ ຈະຖືກພັດທະນາຂຶ້ນໄດ້ຈາກການປະຕິບັດຕົວຈິງ, ແຕ່ບາງຫລັກການພື້ນຖານຢູ່ຂ້າງ ລຸ່ມນີ້ ຈະເຮັດໃຫ້ທ່ານຮູ້ ແລະ ເຂົ້າໃຈຕື່ມ ກ່ຽວກັບວິທີການສຳພາດ.

## 4.1. ຈະສ້າງສາຍພົວພັນກັບຜູ້ຖືກສຳພາດແນວໃດ?

- ທ່ານຈະຕ້ອງພົວພັນກັບນາຍບ້ານ ແລະ ຄະນະບ້ານກ່ອນຈະໄປຫາຄົວເຮືອນ.

- ທ່ານຈະຕ້ອງນັດພົບກັບຄົວເຮືອນກ່ອນ ແລ້ວຈຶ່ງໄປສຳຫຼວດ. ສິ່ງຕໍ່ໄປນີ້ອາດຈະເປັນປະໂຫຍດໃນການສ້າງສາຍພົວພັນ:

- ການເຂົ້າໄປຫາຄົນໃນຄົວເຮືອນ ຕ້ອງເຂົ້າໄປທາງປະຕູ, ບໍ່ໃຫ້ປີນຂ້າມຮົ້ວເຂົ້າໄປ ຫຼື ລ່ວງລ້ຳເຂດແດນອື່ນໆຂອງເຂົາເຈົ້າ.
- ສະເໜີຈຸດປະສົງ ແລະເປົ້າໝາຍ ຂອງການສຳຫຼວດໃຫ້ຄົວເຮືອນຮັບຊາບ.
- ພາສາຂອງການສຳພາດ ໃນເວລາເຂົ້າໄປຫາຄົວເຮືອນ ຕ້ອງໃຫ້ຮູ້ກ່ອນວ່າ ຄົນໃນຄົວເຮືອນເວົ້າພາສາຫຍັງ. ໃຫ້ໃຊ້ພາສາທີ່ທ່ານ ແລະ ຜູ້ຖືກສຳພາດ ສາມາດເຂົ້າໃຈກັນໄດ້ (ຖ້າບໍ່ສາມາດໃຊ້ພາສາດຽວກັນ ແມ່ນຈຳເປັນຕ້ອງໄດ້ໃຊ້ນາຍພາສາຊ່ວຍແປໃຫ້).
- ເຮັດໃຫ້ມີຄວາມປະທັບໃຈທີ່ດີໃນເວລາພົບກັນຄັ້ງທຳອິດ.
- ຕ້ອງມີວິທີການເຂົ້າຫາຜູ້ຖືກສຳພາດໃນທາງທີ່ດີສະເໝີ.
- ຕ້ອງເນັ້ນໃຫ້ຜູ້ຖືກສຳພາດຮູ້ວ່າ ຈະຮັກສາຄຳຕອບຂອງເຂົາເຈົ້າເປັນຄວາມລັບ.
- ໃຫ້ຕອບຄຳຖາມ ຂອງຜູ້ຖືກສຳພາດຢ່າງກົງໄປກົງມາ.
- ໃນລະຫວ່າງການສຳພາດ, ຄວນຫລີກລ່ຽງບໍ່ໃຫ້ມີຄົນອື່ນ ທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນຢູ່ບ່ອນ ນັ້ນ.

## 4.2. ຂໍ້ແນະນຳກ່ຽວກັບການສຳພາດ

ຕະຫລອດການສຳພາດ ນັກເດີນສຳຫຼວດ ຈະຕ້ອງເປັນຄົນເປັນກາງ ບໍ່ໂອນອຽງ. ຄົນທົ່ວໄປຈະມີມາລະຍາດສຸພາບ ແລະ ຄິດວ່າຕົນຄວນໃຫ້ຄຳຕອບທີ່ທ່ານຢາກໄດ້ຍິນ. ຈະບໍ່ເຮັດໃຫ້ຜູ້ຖືກສຳພາດຮູ້ວ່າ ລາວໃຫ້ຄຳຕອບ "ຖືກ" ຫຼື "ຜິດ" ຈາກສີໜ້າ ຫຼື ນ້ຳສຽງຂອງທ່ານ ແລະ ບໍ່ໃຫ້ສະແດງອາການວ່າເຫັນ ພ້ອມ ຫຼື ບໍ່ເຫັນພ້ອມ ກັບຄຳຕອບທີ່ຜູ້ຖືກສຳພາດໃຫ້ມາ. ໃຫ້ສັງເກດວ່າ ຄຳຖາມຢູ່ໃນໃບສອບຖາມ ໄດ້ຖືກແຕ່ງມາຢ່າງລະມັດລະວັງ ເພື່ອໃຫ້ມີລັກສະນະເປັນກາງ, ບໍ່ເຂົ້າຂ້າງໃຜໝົດ ແລະ ບໍ່ໃຫ້ແນະນຳວ່າ ຄຳຕອບໜຶ່ງ ເປັນຄຳຕອບທີ່ຖືກກ່ວາຄຳຕອບອື່ນ. ການອ່ານຄຳຖາມບໍ່ ໝົດຂໍ້ອາດ ເປັນການທຳລາຍ ຄວາມເປັນກາງ. ຖ້າກໍລະນີຄຳຕອບບໍ່ຊັດເຈນ, ເປັນໜ້າສົງໃສ ໃຫ້ພະຍາຍາມຖາມ ຄືນເພື່ອພິສູດຢັ້ງຢືນ ໃນລັກສະນະເປັນກາງ ຕົວຢ່າງໃນການຖາມຄືນ:

*" ທ່ານສາມາດອະທິບາຍໄດ້ຕື່ມອີກໜ້ອຍໜຶ່ງໄດ້ບໍ່ ?"*

*" ຂ້າພະເຈົ້າບໍ່ໄດ້ຍິນຄັກ, ກະລຸນາຕອບຂ້າພະເຈົ້າໃຫມ່ອີກເທື່ອໜຶ່ງໄດ້ບໍ່?"*

- ບໍ່ໃຫ້ຊີ້ແນະຄຳຕອບ ຕໍ່ຜູ້ຖືກສຳພາດເດັດຂາດ

ຖ້າຄຳຕອບທີ່ຕອບມາ ບໍ່ກົງກັບຈຸດໃຈຂອງຄຳຖາມ, ບໍ່ໃຫ້ຂັດຈັງຫວະໂດຍໃຊ້ຄຳເວົ້າ *"ຂ້າພະເຈົ້າຄິດວ່າ ທ່ານໝາຍຄວາມວ່າ.........ແມ່ນບໍ່?* ໃຫ້ຖາມຢັ້ງຢືນ ໂດຍວິທີທີ່ເຮັດໃຫ້ຜູ້ຖືກສຳພາດຮູ້ຄຳ ຕອບດ້ວຍຕົວເອງ ໂດຍຕົງກັບປະເດັນຂອງຄຳຖາມ. ທ່ານຈະຕ້ອງບໍ່ອ່ານລາຍການຄຳຕອບ ໃນ ແບບສອບຖາມ ໃຫ້ຜູ້ຖືກສຳພາດຟັງຈັກເທື່ອ.

- ບໍ່ໃຫ້ປ່ຽນຄຳເວົ້າ ຫຼືປະໂຫຍກຂອງຄຳຖາມ
- ໃຫ້ແກ້ໄຂຜູ້ຖືກສຳພາດທີ່ກັງວົນບໍ່ຢາກຕອບຄຳຖາມຢ່າງມີໄຫວພິບ
- ບໍ່ໃຫ້ສຳພາດຢ່າງຟ້າວຟັ່ງ

ໃຫ້ຖາມຄຳຖາມຢ່າງຈະແຈ້ງ ເພື່ອຮັບປະກັນໃຫ້ຜູ້ຖືກສຳພາດເຂົ້າໃຈ, ໃຫ້ຢຸດພັກເຊົາເລັກໜ້ອຍ ຫຼັງຈາກຖາມແຕ່ລະຄຳຖາມ, ໃຫ້ເຮັດວຽກດ້ວຍຄວາມຫຸ່ນທ່ຽງ ແລະ ຮັບປະກັນໃຫ້ໄດ້ຄຳຕອບຄົບຖ້ວນ, ຖືກຕ້ອງ ແລະຊັດເຈນ ກ່ອນຈະຈົດກ່າຍຫຍັງລົງໄປ. ບໍ່ໃຫ້ຈົດກ່າຍເອົາຄຳຕອບໃນທັນທີທັນໃດໂລດ ທີ່ທ່ານຄິດວ່າຜິດ, ແຕ່ໃຫ້ທ່ານ ຖາມພິສູດຢ່າງ ມີໄຫວພິບ ແລະມີຈຸດຢືນເປັນກາງ ເພື່ອໃຫ້ໄດ້ຄຳຕອບທີ່ຖືກຕ້ອງ.

## 4.3 ການຈົດກ່າຍຄຳຕອບ ແລະ ການດັດແກ້ຄຳຜິດ

ການຈົດກ່າຍຄຳຕອບໃສ່ແບບສອບຖາມຕ້ອງຂຽນດ້ວຍບິກສີຟ້າທີ່ໄດ້ຢາຍໃຫ້.
ປະເພດຄຳຖາມທີ່ມີ ຢູ່ໃນແບບສອບຖາມ ລວມມີ ດັ່ງນີ້:

1. ຂີດວົງມົນອ້ອມເອົາຄຳຕອບທີ່ຖືກຕ້ອງ.
2. ຂຽນເປັນຕົວໜັງສື.
3. ຂຽນຕົວເລກ

ມັນມີຄວາມສຳຄັນທີ່ຈະຕ້ອງຈົດກ່າຍຄຳຕອບ ໃຫ້ສະອາດຮຽບຮ້ອຍ. ຂຽນຄຳຕອບໃສ່ໃຫ້ຖືກບ່ອນ, ທ່ານຈະຕ້ອງຂຽນໃສ່ໃຫ້ຊັດເຈນ ແລະອ່ານອອກງ່າຍ.

ຕົວຢ່າງ:

1. ໃນຄຳຖາມອາຍຸປີເຕັມຂຽນເປັນຕົວເລກ 5 3 ໃນກໍລະນີຜິດ

| 4 9<br>~~5 3~~ |
|---|

2. ໃນກໍລະນີຂຽນເປັນຕົວໜັງສືເປັນຕົ້ນແມ່ນອາຊີບ

| ບໍລິການຕັດຜົມ<br>~~ຄ້າຂາຍເສື້ອຜ້າຢູ່ຕະຫລາດ~~ |
|---|

3. ກໍລະນີຂີດວົງມົນອ້ອມ

| | |
|---|---|
| ສຳເລັດ………………………………………… | (1) |
| ບໍ່ຢູ່ເຮືອນ ຫຼືບໍ່ມີຜູ້ທີ່ສາມາດໃຫ້ຄຳຕອບໄດ້……….. | 2 |
| ເລື່ອນເວລາ…………………………………….. | 3 |
| ປະຕິເສດ………………………………………… | 4 |
| ສຳເລັດບາງສ່ວນ………………………………… | (5) |
| ອື່ນໆ *(ເວົ້າແຈ້ງ):* ________________________ | 6 |

## 4.4. ຄຳຖາມທີ່ບໍ່ຄວນຈະຖາມ (ບໍ່ຢູ່ໃນປະເດັນ)

ຕ້ອງລະມັດລະວັງ, ບໍ່ຄວນຖາມຄຳຖາມ ທີ່ບໍ່ຢູ່ໃນປະເດັນທີ່ຈະຖາມ ຫຼື ບໍ່ຈຳເປັນຕ້ອງຖາມອີກ. ໃນກໍລະນີ ທີ່ມີຄຳຕອບໜຶ່ງທີ່ເຮັດໃຫ້ຄຳຖາມຕໍ່ໆໄປ ກາຍເປັນຄຳຖາມທີ່ບໍ່ຈຳເປັນຕ້ອງຖາມ ເຊິ່ງຄຳແນະນຳໃຫ້ຂ້າມຄຳຖາມ ໄດ້ຂຽນໄວ້ໃນແບບສອບຖາມໃຫ້ຮູ້ແລ້ວ.

## 4.5. ບໍ່ໃຫ້ກ່າຍ ( ລອກ) ຄືນໃຫມ່

ບໍ່ໃຫ້ກ່າຍແບບສອບຖາມຄືນໃໝ່ ເມື່ອໃດທີ່ຍັງສາມາດອ່ານອອກໄດ້. ການຈົດກ່າຍຄືນ ຍິ່ງເປັນໂອກາດພາໃຫ້ມີຄວາມຜິດພາດຫຼາຍຂຶ້ນ ແລະ ປະລິມານແບບສອບຖາມທີ່ພິມໄວ້ຈະບໍ່ພຽງພໍ. ແຕ່ອາດຈະມີບາງຈຳນວນສຳລັບແຮໄວ້ ໃນກໍລະນີຈຳເປັນເຊັ່ນ: ແບບສອບຖາມຖືກໄຟໄໝ້, ຖືກນ້ຳເປື້ອນ ຈົນບໍ່ສາມາດອ່ານໄດ້ເປັນຕົ້ນ. ຖ້າຫາກມີການຈົດກ່າຍໃບແບບສອບຖາມຄືນໃຫ່ມ ໃຫ້ຮັກສາໃບແບບສອບຖາມເກົ່າໄວ້ ແລະ ເວລາສົ່ງຄືນແບບສອບຖາມໃຫ້ນັກກວດກາ ແມ່ນໃຫ້ສົ່ງຄົບຖ້ວນ ນັບທັງສະບັບເກົ່າ ແລະ ສະບັບໃໝ່ ແລະ ລາຍງານໃຫ້ນັກກວດກາຊາບເຫດຜົນ.

## 5. ແນວຄວາມຄິດ ແລະນິຍາມ

ໃນພາກນີ້ຈະໄດ້ອະທິບາຍ ເຖິງແນວຄວາມຄິດ ແລະນິຍາມທີ່ສຳຄັນ ຈະນຳໃຊ້ຢູ່ໃນແບບສອບຖາມ. *ຄວາມສາມາດໃນການສົມທຽບແນວຄວາມຄິດກັບຂໍ້ມູນທີ່ນຳໃຊ້ເຂົ້າໃນການສຳຫຼວດ ຊຶ່ງທາງຫ້ອງ ການສະຖິຕິໄດ້ດຳເນີນປະຕິບັດໃນປະຈຸບັນ ແມ່ນມີຄວາມຮູ້ສຶກວ່າມັນເພີ້ມຂຶ້ນ,* ດັ່ງນັ້ນ ມັນມີຄວາມຈຳເປັນເຖິງການກະກຽມບັນດາຄຳນິຍາມ ໃນຫົວຂໍ້ ແລະລາຍການອັນໃໝ່. ສຳລັບການກະກຽມແມ່ນນຳໃຊ້ເຄື່ອງມື ມາດຕະຖານ ແລະນິຍາມ ຂອງອົງການສະຫະປະຊາຊາດທີ່ໄດ້ແນະນຳ ຊຶ່ງໄດ້ມີ

ການປັບປຸງໃຫ້ມີຄວາມເໝາະສົມກັບສະພາບຕົວຈິງ ຂອງປະເທດເຮົາ, ບັນດານິຍາມທີ່ຕ້ອງການ ແລະພົວພັນເຖິງການສຳຫຼວດມີດັ່ງລຸ່ມນີ້.

## 5.1 ນິຍາມຄົວເຮືອນ

ໂດຍທົ່ວໄປແມ່ນເຂົ້າໃຈວ່າ ***ຄົວເຮືອນ*** ແມ່ນກຸ່ມຄົນທີ່ທຳມາຫາກິນ, ຊອກຫາອາຫານ, ມີທີ່ພັກອາໃສຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຕ່າງໆຮ່ວມກັນ. ປົກກະຕິແລ້ວ ຄົວເຮືອນຈະປະກອບມີ ບຸກຄົນທີ່ມີສາຍພົວພັນກັນເຊັ່ນ: ຜົວ, ເມຍ, ລູກ ແລະ ພໍ່ແມ່, ແຕ່ບາງເທື່ອກໍ່ລວມທັງບຸກຄົນທີ່ບໍ່ມີ ສາຍພົວພັນທາງຍາດພີ່ນ້ອງ ເຊັ່ນ: ຜູ້ມາອາໃສຢູ່ນຳ ຫຼື ກຳມະກອນ, ຄົນງານທີ່ພັກອາໃສຢູ່ນຳຄົວ ເຮືອນ ໂດຍມີສ່ວນຮ່ວມ ໃນກິດຈະກຳຕ່າງໆຮ່ວມກັນ.

- ***ຄົວເຮືອນສ່ວນບຸກຄົນ***
  1. ຄົວເຮືອນທີ່ມີຄົນຜູ້ດຽວແມ່ນຄົນຜູ້ໜຶ່ງ ທີ່ຢູ່ທັງໝົດ ຫຼືສ່ວນໃດໜຶ່ງຂອງເຮືອນ, ຊອກຫາກິນ, ສຳລັບຕົວລາວເອງ ແລະສິ່ງຂອງຈຳເປັນອື່ນໆ ສຳລັບການດຳລົງຊີວິດ ໂດຍປັດສະຈາກການ ຊອກຫາຮ່ວມກັນກັບຄົນອື່ນໆທີ່ມີ ຫຼື ບໍ່ມີສຳມະໂນຄົວຂອງຕົນເອງ.
  2. ຄົວເຮືອນທີ່ມີຫລາຍຄົນ ແມ່ນກຸ່ມຄົນທີ່ມີສອງ ຫຼື ຫລາຍກ່ວານັ້ນ ທີ່ອາໃສຢູ່ທັງໝົດ ຫຼືສ່ວນໃດໜຶ່ງຂອງເຮືອນ; ຊົມໃຊ້ສິ່ງຂອງຕ່າງໆທີ່ຈຳເປັນໃນການດຳລົງຊີວິດຮ່ວມກັນທີ່ມີ ຫຼື ບໍ່ມີສຳມະໂນຄົວດຽວກັນ. ປົກກະຕິແລ້ວຄົວເຮືອນແບບນີ້ ປະກອບມີ: ຜົວ, ເມຍ, ລູກ, ພີ່ນ້ອງ, ຄົນ ຮັບໃຊ້ ແລະ ຜູ້ອື່ນໆທີ່ອາໃສ ຢູ່ນຳ.

- ***ຄົວເຮືອນລວມໝູ່***

ເຮືອນຢູ່ລວມໝູ່ ປະກອບດ້ວຍບຸກຄົນທີ່ເປັນໂສດ ຫຼື ຄົວເຮືອນທີ່ຢູ່ອາໃສຫຼັງດຽວກັນ ແລະ ມີສຳມະໂນຄົວອັນດຽວກັນ, ແມ່ນເຮືອນພັກຂອງບັນດາພະນັກງານ, ອົງການຈັດຕັ້ງ, ວິສາຫະກິດ, ໂຮງຈັກ, ໂຮງງານ, ໂຮງໝໍ ແລະ ວັດ.

ຕົວຢ່າງ: ຫໍພັກ (ຄົວເຮືອນລວມໝູ່), ໂຮງຮຽນເດັກກຳພ້າ ຫລັກ 62, ຫໍພັກແພດສາດຊັ້ນກາງ, ຫໍພັກນັກຮຽນ, ຫໍພັກສ້າງຄູດົງໂດກ, ວັດວາອາຮາມຂອງບັນດາພະສົງ ແລະໂບດຂອງຄຸນພໍ່, ຄຸນແມ່ໃນສາສະໜາຄຣິສຕຽນອາໃສຢູ່...

## 5.2 *ກິດຈະກຳທາງເສດຖະກິດ:*

ກິດຈະກຳທາງດ້ານເສດຖະກິດ ແມ່ນກິດຈະກຳ ທີ່ເຄື່ອນໄຫວເພື່ອສ້າງລາຍຮັບ, ລາຍໄດ້ໃຫ້ແກ່ຕົນເອງ ຫຼື ຄົວເຮືອນ ເຊັ່ນ: ການເຮັດວຽກໃຫ້ຕົນເອງ, ການຜະລິດສິນຄ້າ-ບໍລິການ ແລະການຜະລິດກະສິກຳ. ລວມທັງການຈຳໜ່າຍ ແລະການຊົມໃຊ້ເອງ. *(ຕາມລະບົບສາລະບານລະຫັດຂະແໜງເສດຖະກິດ ໃນລະບົບສາກົນ ISIC, REV. 4)*

## 5.3 *ກິດຈະກຳບໍ່ແມ່ນເສດຖະກິດ*:

ແມ່ນ ກິດຈະກຳທີ່ບໍ່ໄດ້ສ້າງລາຍຮັບໃຫ້ແກ່ຄົວເຮືອນເປັນຕົ້ນແມ່ນ ວຽກເຮືອນການຊານ ການກະກຽມປຸງແຕ່ງອາຫານ, ການລ້າງ, ການຊັກລີດເສື້ອຜ້າ, ການອອກຕະຫລາດ, ການປົວລະບັດຮັກ ສາຄົນໄຂ້, ເບິ່ງແຍງຄົນແກ່ ຫຼື ເດັກນ້ອຍໃນຄົວເຮືອນ, ການອະນາໄມ ແລະທຳຄວາມສະອາດ, ຮັກສາທີ່ຢູ່ອາໃສ ແລະສ້ອມແປງເຄື່ອງໃຊ້ສ່ອຍ ໃນຄົວເຮືອນ.

## 5.4 **ນິຍາມແຮງງານເດັກ**:

ແມ່ນເດັກອາຍຸຕ່ຳກວ່າທີ່ກົດໝາຍກຳນົດ (ສປປ ລາວ ແມ່ນ 14 ປີ ຕາມກົດໝາຍແຮງງານ ແຕ່ອີງການແຮງງານສາກົນແມ່ນ 18 ປີລົງມາ) ທີ່ໄດ້ເຮັດວຽກເພື່ອຊ່ວຍທຸລະກິດຄົວເຮືອນ ຫຼື ເຮັດວຽກໃຫ້ຜູ້ອື່ນ ໂດຍໄດ້ຮັບ ຫຼື ບໍ່ໄດ້ຮັບຄ່າແຮງງານ, ແຕ່ວຽກທີ່ເຂົາເຮັດນັ້ນ ສົ່ງຜົນສະທ້ອນທີ່ບໍ່ດີຕໍ່ ສຸຂະພາບ, ຮ່າງກາຍ, ຈິດໃຈ, ການຮຽນ ແລະພັດທະນາການຂອງເດັກ.

- ***<u>ເດັກເຮັດວຽກ</u>***: ແມ່ນເດັກອາຍຸຕ່ຳກວ່າທີ່ກົດຫມາຍກຳນົດ (ສປປ ລາວ ແມ່ນ14 ປີ ຕາມກົດຫມາຍແຮງງານ ແຕ່ອີງການແຮງງານສາກົນແມ່ນ 18 ປີລົງມາ) ທີ່ໄດ້ເຮັດວຽກ ເພື່ອຊ່ວຍຄອບຄົວ ຫຼື ເຮັດວຽກໃຫ້ຜູ້ອື່ນ ໂດຍໄດ້ຮັບ ຫຼື ບໍ່ໄດ້ຮັບຄ່າແຮງງານ, ແຕ່ວຽກທີ່ເຂົາເຮັດນັ້ນບໍ່ໄດ້ສົ່ງຜົນສະທ້ອນທີ່ບໍ່ດີຕໍ່ສຸຂະພາບ, ຮ່າງກາຍ, ຈິດໃຈ, ການຮຽນ ແລະ ພັດທະນາການຂອງເດັກ.
- **<u>ເດັກນ້ອຍທີ່ເຮັດວຽກຊ່ວຍຄອບຄົວເຊັ່ນ</u>**: ລ້າງຖ້ວຍ, ຊັກເຄື່ອງ, ແຕ່ງກິນ, ເອົານ້ອງ, ຕັກນ້ຳ, ລ້ຽງສັດ ເວລາເລີກຮຽນ ແລະ ອື່ນໆ ຕາມກຳລັງທີ່ເດັກເຮັດໄດ້ ແລະ ເຮັດບາງເວລານັ້ນບໍ່ແມ່ນ ແຮງງານເດັກ ແຕ່ເປັນເດັກເຮັດວຽກ.
- **<u>ເດັກນ້ອຍທີ່ເຮັດວຽກ ຫຼື ຖືກບັງຄັບໃຫ້ເຮັດເຊັ່ນ</u>**: ຊ່ວຍທຸລະກິດຄົວເຮືອນ ໂດຍໃຫ້ອອກຈາກໂຮງຮຽນ ຫຼື ເປັນວຽກຫນັກເຊັ່ນ: ແບກຫາບຕະຫລອດ, ເຮັດວຽກກັບທາດເຄມີ ແລະສານ ອັນຕະລາຍ ອື່ນໆ, ໄປເຮັດວຽກໃຫ້ຄົວເຮືອນຂອງຄົນອື່ນ ເພື່ອຮັບເງິນ, ໃຊ້ຫນີ້ ຫຼື ວຽກທີ່ ເຮັດກ່ຽວກັບການຄ້າ ປະເວນີ, ຢາເສບຕິດ ນັ້ນຄືແຮງງານເດັກ.

## 6. ໜ້າທີ່ກ່ອນການເດີນສຳຫຼວດ

ຈະສຳຫຼວດໃຜ ແລະຢູ່ໃນຄົວເຮືອນໃດ ?

6.1 ຄົວເຮືອນທີ່ເປັນເປົ້າໝາຍຂອງການສຳຫຼວດແຮງງານ ໃນຄັ້ງນີ້ ແມ່ນຄົວເຮືອນສ່ວນບຸກຄົນທີ່ຢູ່ເປັນປະຈຳ ແລະປົກກະຕິ, ຄົວເຮືອນທີ່ຍ້າຍມາຈາກບ້ານອື່ນທີ່ມາອາໃສຢູ່ໃນບ້ານ ເຖິງວ່າ ຈະມີໃບຍົກຍ້າຍ ຫຼືບໍ່ມີໃບຍົກຍ້າຍກໍຕາມ ແລະຄົວເຮືອນທີ່ກຳລັງຈະຍ້າຍໄປຢູ່ບ່ອນອື່ນ ແຕ່ເວລາສຳຫຼວດເຂົາເຈົ້າຍັງຢູ່ໃນບ້ານ ກໍຖືວ່າແມ່ນຄົວເຮືອນທີ່ເປົ້າໝາຍຂອງການສຳຫຼວດ, *ແຕ່ບໍ່ກວມເອົາຄົວເຮືອນທີ່ຂຶ້ນກັບບ້ານອື່ນ ທີ່ມາທຳການຜະລິດໃນຊ່ວງໄລຍະເວລາໃດໜຶ່ງ.*

6.2 ບຸກຄົນໃນຄົວເຮືອນທີ່ນອນຢູ່ໃນເປົ້າໝາຍຂອງການສຳພາດມີດັ່ງນີ້:

- **<u>ຄົນທີ່ມີຫນ້າຢູ່ເປັນປະຈຳ</u>:**

*ແມ່ນບັນດາຄົນ ຊຶ່ງໃນຕົວຈິງໄດ້ຢູ່ຢ່າງປົກກະຕິໃນຄົວເຮືອນ ຈົນຮອດເວລານັດຫມາຍການສຳຫຼວດລວມມີ:*

- ບັນດາຄົນທີ່ຍັງອາໃສຢູ່ໃນຄົວເຮືອນ ແຕ່ຜ່ານມາຈົນຮອດເວລານັດການສຳຫຼວດ, ບໍ່ຈຳແນກວ່າ ເຂົາເຈົ້າຂຶ້ນສຳມະໂນຄົວແລ້ວ ຫຼື ຍັງບໍ່ທັນຂຶ້ນສຳມະໂນຄົວກໍ່ຕາມ ແລະບຸກຄົນທີ່ບໍ່ທັນໄດ້ຂຶ້ນສຳ ມະໂນຄົວແຕ່ຍ້າຍມາຢູເປັນເວລາ 6 ເດືອນຂຶ້ນໄປ.

- ບັນດາເດັກນ້ອຍເກີດໃຫ່ມ ແລະ ຍັງມີຊີວິດຢູ່ຮອດເວລານັດຫມາຍການສຳຫຼວດ.

- ບັນດາຄົນເຖິງວ່າໄດ້ມີໃບຍົກຍ້າຍຈະໄປຢູ່ບ່ອນອື່ໆ ແຕ່ຮອດເວລານັດຫມາຍການສຳຫຼວດ ເຂົາ ເຈົ້າຍັງບໍ່ທັນໄດ້ຍົກຍ້າຍໄປຢູ່ບ່ອນໃຫ່ມເທື່ອ.

- ***<u>ບັນດາຄົນຍົກຍ້າຍມາຢູ່ຄົວເຮືອນຢ່າງເປັນປົກກະຕິ, ມາຢູ່ຖາວອນ ຈົນຮອດເວລານັດຫມາຍການສຳຫຼວດ ລວມມີ:</u>***

- ບັນດາຄົນຍົກຍ້າຍຈາກທີ່ຢູ່ເກົ່າ ມີຫນັງສືການຍົກຍ້າຍ (ບໍ່ໄດ້ນັບໄລຍະເວລາວ່າຄົນດັ່ງກ່າວຍ້າຍມາດົນປານໃດແລ້ວ).

- ບັນດາຄົນຍົກຍ້າຍຈາກທີ່ຢູ່ເກົ່າ ໂດຍບໍ່ໄດ້ນັບໄລຍະເວລາດົນປານໃດແລ້ວ, ເຖິງວ່າບໍ່ມີໃບຍົກຍ້າຍ, ແຕ່ໄດ້ຢັ້ງຢືນຢ່າງຈະແຈ້ງວ່າ ເຂົາເຈົ້າມາຢູ່ຖາວອນໃນຄົວເຮືອນ ເຊັ່ນ: ມາສ້າງເສດຖະກິດ

ໃຫ່ມ, ມາຢູ່ເຮືອນຮ່ວມກັບສາມີ (ພັນລະຍາ), ມາຢູ່ເປັນລູກລ້ຽງ, ທະຫານ, ຕຳຫຼວດທີ່ໂຕນອອກ

ຈາກກົມແຖວ, ພະນັກງານ, ກຳມະກອນ ປະລະວຽກງານ ແລ້ວມາຢູ່ນຳຄອບຄົວ...

- ***<u>ຄົນທີ່ບໍ່ມີຫນ້າຊົ່ວຄາວລວມມີ:</u>***

- ບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດງານ, ປິ່ນປົວພະຍາດ, ທ່ອງທ່ຽວ, ທັດສະນະສຶກສາ, ຮໍ່າຮຽນ ໄລຍະສັ້ນ ຢູ່ຕ່າງປະເທດ (ຫລຸດ 6 ເດືອນລົງມາ).

- ບັນດາລັດຖະກອນໄປປະຕິບັດງານ ພາຍໃນປະເທດ (ນັບທັງວຽກເຄື່ອນທີ່).

- ບັນດາບຸກຄົນທີ່ໄປຢ້ຽມຢາມຍາດພີ່ນ້ອງ, ໄປຄ້າຂາຍເປັນຖ້ຽວ, ໄປທ່ອງທ່ຽວພັກຮ້ອນ...
- ບັນດາບຸກຄົນທີ່ກໍາລັງຮັກສາພະຍາບານຕາມບັນດາໂຮງໝໍ, ໂຮງພະຍາບານ, ສຸກສາລາ, ສູນພັກຟື້ນ (ບໍ່ນັບສູນປິ່ນປົວໂລກຕິດແປດຈໍາເພາະ).
- ບັນດາຄົນທີ່ໄປທໍາມາຫາກິນຢູ່ບ່ອນອື່ນ. ບາງຄັ້ງຄາວຈຶ່ງກັບມາຢາມຄອບຄົວ (ແຕ່ບໍ່ມີຈຸດປະສົງໄປອາໃສຢູ່ແບບຖາວອນບ່ອນທີ່ຜູ້ກ່ຽວທໍາມາຫາກິນກາຍ 6 ເດືອນ).

6.3 ການຂຶ້ນບັນຊີຄົວເຮືອນ:

ຫົວໜ້າຄົວເຮືອນ ແມ່ນຜູ້ມີບົດບາດ ແລະເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ສ່ວນ ຫລາຍລາວຈະເປັນຜູ້ຫາລາຍຮັບມາໃຫ້ຄົວເຮືອນຫລາຍກ່ວາສະມາຊິກຂອງຄົວເຮືອນທັງເປັນ ຜູ້ເບິ່ງແຍງສະວັດດີການຂອງຄົວເຮືອນ. ຫົວໜ້າຄົວເຮືອນອາດແມ່ນເພດຊາຍ ຫຼືຍິງ.

## 7. ວິທີການຄັດເລືອກຄົວເຮືອນຕົວແທນ

ການຄັດເລືອກຄົວເຮືອນຕົວແທນໃນການສໍາຫຼວດສະພາບກໍາລັງແຮງງານ ແລະການນໍາໃຊ້ແຮງງານເດັກໃນ ສປປ ລາວ ກ່ອນອື່ນນັກເດີນສໍາຫຼວດຕ້ອງໄດ້ຂຶ້ນບັນຊີຈໍານວນຄົວເຮືອນທັງຫມົດຂອງບ້ານຫານໃຫ້ຈໍານວນ 20 ຄົວເຮືອນຕົວແທນທີ່ຕ້ອງການ.

- **ຂັ້ນຕອນການຄັດເລືອກຄົວເຮືອນຕົວແທນ**

1. **ຂັ້ນຕອນ 1: ຂຶ້ນບັນຊີລາຍຊື່ຫົວໜ້າຄົວເຮືອນທັງຫມົດນໍາອໍານາດການປົກຄອງບ້ານ.**
2. **ຂັ້ນຕອນ 2: ເອົາຈໍານວນຄົວເຮືອນທັງໝົດທີ່ໄດ້ຂຶ້ນບັນຊີ ຫານໃຫ້ຈໍານວນ 20 ຄົວເຮືອນທີ່ຕ້ອງການ**

**ຊຶ່ງມີສູດການຄັດເລືອກຕົວແທນດັ່ງລຸ່ມນີ້:**

**ຊອກຫາໄລຍະຫ່າງ :** $I = N/n$

**I = ໄລຍະຫ່າງ**

**N= ຈໍານວນຄົວເຮືອນທັງຫມົດໃນບ້ານ.**

**n= ຈໍານວນຄົວເຮືອນຕົວແທນທີ່ຕ້ອງການ (ຈໍານວນ 20 ຄົວເຮືອນ).**

**- ຖ້າຜົນຫານເປັນເລກເສດ ໃຫ້ຮັກສາຫລັງຈຸດໄວ້ 1 ໂຕ**

ຕົວຢ່າງ: ມີຈໍານວນຄົວເຮືອນທີ່ໄດ້ຂຶ້ນບັນຊີທັງຫມົດຂອງບ້ານແມ່ນ 67 ຄົວເຮືອນທີ່ມີໜ້າຢູ່ເປັນປະຈໍາ, ຢູ່ເປັນປົກກະຕິພາຍໃນບ້ານ ຊຶ່ງເຮົາຕ້ອງການຄົວເຮືອນຕົວແທນຈໍານວນ 20 ຄົວເຮືອນການຄິດໄລ່ແມ່ນເອົາຈໍານວນຄົວເຮືອນທັງໝົດ ຫານໃຫ້ 20 ຄົວເຮືອນ ( 67/20= 3.35) ເຮົາໄດ້ 3.4 (ເຮົາຮັກສາຫລັງຈຸດໄວ້ 1 ໂຕ ຖ້າຫລັງຈຸກໂຕທີ 2 ຫາກໃຫຍ່ຫວ່າ ຫຼືເທົ່າກັບ 5 ເຮົາສາມາດປັດຫລັງຈຸດໂຕທີ

1 ຂື້ນໄດ້) ໄລຍະຫ່າງທີ່ເຮົາຈະໄດ້ແມ່ນ 3.4 ເຮົາເຮັດສະຫລາກ 3 ໃບເພື່ອຄັດເລືອກຄົວເຮືອນຕົວແທນທຳອິດ

- ຂັ້ນຕອນທຳອິດ: ໃຫ້ທ່ານຍົກກ່ອງບັນຈຸສະຫລາກຂຶ້ນໃຫ້ວິດສາຍຕາແລ້ວ ໃຫ້ຕາງຫນ້າຄະນະບ້ານ 1 ທ່ານຈົກເອົາສະຫລາກ 1 ໃບ, ຖ້າໄດ້ເລກໃດແມ່ນເປັນຄົວເຮືອນຕົວແທນທຳອິດ (ສົມມຸດໄດ້ເລກ 2).
- ຂັ້ນຕອນທີ 2: ເຮືອນຕົວແທນທຳອິດທີ່ຈົກໄດ້ ບວກກັບໄລຍະຫ່າງ (2+3,4= 5,4) ເຮົາໄດ້ຄົວເຮືອນ ຕົວແທນທີ 2 ແມ່ນຄົວເຮືອນລຳດັບເລກທີ 5.
- ຂັ້ນຕອນທີ 3: 5,4 + 3,4= 8,8 ເຮົາໄດ້ຄົວເຮືອນຕົວແທນທີ 3 ແມ່ນຄົວເຮືອນລຳດັບເລກທີ 9
- ຂັ້ນຕອນທີ 4: 8,8+ 3,4=12,2 ເຮົາໄດ້ຄົວເຮືອນຕົວແທນທີ 4 ແມ່ນຄົວເຮືອນລຳດັບເລກທີ 12
- ຂັ້ນຕອນທີ 5: 12,2+3,4=15,6 ເຮົາໄດ້ຄົວເຮັນຕົວແທນທີ 5 ແມ່ນຄົວເຮືອນລຳດັບ ເລກທີ 16
- ຂັ້ນຕອນທີ 6: 15,6+3,4=19 ເຮົາໄດ້ຄົວເຮືອນຕົວແທນທີ 6 ແມ່ນຄົວເຮືອນລຳດັບເລກທີ 19
- ຂັ້ນຕອນທີ 7: 19+3,4=22,4 ເຮົາໄດ້ຄົວເຮືອນຕົວແທນທີ 7 ແມ່ນຄົວເຮືອນລຳດັບເລກທີ 22
- ຂັ້ນຕອນທີ 8: 22,4+3,4=25,8 ເຮົາໄດ້ຄົວເຮືອນຕົວແທນທີ 8 ແມ່ນຄົວເຮືອນລຳດັບເລກທີ 26
- ຂັ້ນຕອນທີ 9: 25,8+3,4=29,2 ເຮົາໄດ້ຄົວເຮືອນຕົວແທນທີ 9 ແມ່ນຄົວເຮືອນລຳດັບເລກທີ 29
- ຂັ້ນຕອນທີ 10: 29,2+3,4=32,6 ເຮົາໄດ້ຄົວເຮືອນຕົວແທນທີ10 ແມ່ນຄົວເຮືອນລຳດັບເລກທີ 33
- ຂັ້ນຕອນທີ 11: 32,6+3,4=36 ເຮົາໄດ້ຄົວເຮືອນຕົວແທນທີ 11 ແມ່ນຄົວເຮືອນລຳດັບເລກທີ 36
- ຂັ້ນຕອນທີ 12: 36+3,4=39,4 ເຮົາໄດ້ຄົວເຮືອນຕົວແທນທີ 12 ແມ່ນຄົວເຮືອນລຳດັບເລກທີ 39
- ຂັ້ນຕອນທີ 13: 39,4+3,4=42,8 ເຮົາໄດ້ຄົວເຮືອນຕົວແທນທີ 13 ແມ່ນຄົວເຮືອນລຳດັບເລກທີ 43
- ຂັ້ນຕອນທີ14: 42,8+3,4=46,2 ເຮົາໄດ້ຄົວເຮືອນຕົວແທນທີ 14 ແມ່ນຄົວເຮືອນລຳດັບເລກທີ 46
- ຂັ້ນຕອນທີ15: 46,2+3,4=49,4 ເຮົາໄດ້ຄົວເຮືອນຕົວແທນທີ 15 ແມ່ນຄົວເຮືອນລຳດັບເລກທີ 49

*ເຮົາຈະປະຕິບັດແບບນີ້ໄປຈົນກວ່າຈະຄົບຕາມຈຳນວນ 20 ຄົວເຮືອນຕົວແທນທີ່ຕ້ອງການ* **ຂໍ້ຄວນລະວັງຜົນບວກທີ່ໄດ້ຫາກຫລັງຈຸດຫາກໃຫຍ່ ກວ່າ ຫຼື ເທົ່າກັບ 5 ແມ່ນໃຫ້ປັດຂຶ້ນ ເວລາໝາຍເອົາຄົວເຮືອນຕົວແທນ, ແຕ່ເວລາບວກຊອກຫາຄົວເຮືອນຕົວແທນຕໍ່ໄປແມ່ນເອົາເລກເສດບວກ.**

**ຕົວຢ່າງ: ຕາຕະລາງການຂຶ້ນບັນຊີຄົວເຮືອນ ແລະການຄັດເລືອກຄົວເຮືອນຕົວແທນ**

(ໜ້າປົກການຂຶ້ນບັນຊີຄົວເຮືອນ)

| ລະຫັດທີ່ຕັ້ງ | |
|---|---|
| ຊື່ແຂວງ:........................................................................... | ☐☐ |
| ຊື່ເມືອງ:........................................................................... | ☐☐ |
| ຊື່ບ້ານ:........................................................................... | ☐☐☐ |
| ປະເພດບ້ານ: 1 ຕົວເມືອງ, 2 ຊົນນະບົດມີເສັ້ນທາງ, 3 ຊົນນະບົດບໍ່ມີເສັ້ນທາງ | ☐ |

| | |
|---|---|
| 1. ຈຳນວນຄົວເຮືອນທັງໝົດ | 67 |
| 2. ຄົວເຮືອນຕົວແທນທຳອິດ | 2 |
| 3. ໄລຍະຫ່າງ | 3.4 |
| 4. ຈຳນວນຄົວເຮືອນຕົວແທນ | 20 |

ຊື່ຜູ້ຖືກສຳພາດ: ________________________________

ຊື່ນັກເດີນສຳຫຼວດ: ________________________________

ຊື່ນັກກວດກາ: ________________________________

ວັນທີ,ເດືອນ,ປີສຳພາດ: _____/______/__________

**ນາຍບ້ານ ເຊັນ ແລະປະທັບຕາ**

| (1) ລຳດັບ | (2) ຊື່ ຫົວໜ້າຄົວເຮືອນ | ພົນລະເມືອງ ລວມ | ຍິງ | (3) ເລກທີຄົວເຮືອນຕົວແທນ |
|---|---|---|---|---|
| 01 | ທ. ແສງທອງ | 5 | 2 | |
| 02 | ທ. ແສງ | 3 | 1 | 1 |
| 03 | ທ. ທອງ | 6 | 4 | |
| 04 | ທ. ນ້ອຍ | 7 | 5 | |
| 05 | ທ. ສີງ | 2 | 1 | 2 |
| 06 | ທ. ຕ້ອງ | 5 | 2 | |
| 07 | ທ. ຄຳພິວ | 6 | 1 | |
| 08 | ທ. ແກ້ວ | 9 | 3 | |
| 09 | ທ. ເພັດ | 4 | 1 | 3 |
| 10 | ທ. ສອນ | 2 | 1 | |
| 11 | ທ. ຕຸກ | 8 | 2 | |
| 12 | ທ. ໝອນ | 8 | 3 | 4 |
| 13 | ທ. ສໍ | 6 | 3 | |
| 14 | ທ. ກຽງ | 3 | 1 | |
| 15 | ນ. ພີມ | 5 | 3 | |
| 16 | ທ. ໃຈ | 7 | 5 | 5 |
| 17 | ທ. ວິ | 11 | 2 | |
| 18 | ທ. ວິໄລ | 15 | 8 | |
| 19 | ນ. ເຫລີມ | 10 | 4 | 6 |
| 20 | ທ. ແສງສຸວັນ | 8 | 2 | |
| 21 | ທ. ຄຳພັນ | 4 | 1 | |
| 22 | ທ. ພິມທອງ | 6 | 3 | 7 |
| 23 | ທ. ປໍທາ | 3 | 1 | |
| 24 | ນ. ລັດສະໝີ | 4 | 2 | |
| 25 | ທ. ວັນຄຳ | 2 | 1 | |
| 26 | ທ. ໄພວັນ | 7 | 1 | 8 |
| 27 | ທ. ທອງພຸດ | 5 | 4 | |
| 28 | ທ. ວຽງສະໄໝ | 5 | 1 | |
| 29 | ທ. ອິນຕອງ | 5 | 1 | 9 |
| 30 | ທ. ມະນີວອນ | 11 | 2 | |
| 31 | ທ. ທິບ | 4 | 1 | |
| 32 | ນ.ມີ | 8 | 2 | |
| 33 | ທ.ນອງ | 7 | 1 | 10 |
| 34 | ທ.ແກ້ວນະຄອນ | 6 | 4 | |

| (1) ລຳດັບ | (2) ຊື່ຫົວໜ້າຄົວເຮືອນ | ພົນລະເມືອງ ລວມ | ຍິງ | (3) ເລກທີຄົວເຮືອນຕົວແທນ |
|---|---|---|---|---|
| 35 | ທ. ວິໄລສັກ | 2 | 1 | |
| 36 | ທ. ສຸບັນ | 4 | - | 11 |
| 37 | ນ. ພອງມະລາ | 7 | 2 | |
| 38 | ທ. ດຳ | 5 | 1 | |
| 39 | ທ. ສຸກັນ | 4 | 1 | 12 |
| 40 | ທ. ສານ | 5 | 1 | |
| 41 | ທ. ຄອນ | 4 | 1 | |
| 42 | ທ. ພັດ | 4 | 2 | |
| 43 | ທ. ພູ | 3 | 1 | 13 |
| 44 | ທ. ນັ້ນ | 6 | 5 | |
| 45 | ທ. ສັນ | 7 | 4 | |
| 46 | ທ. ພຸດ | 9 | 7 | 14 |
| 47 | ທ. ກັນ | 3 | 1 | |
| 48 | ທ. ອານັນ | 8 | 5 | |
| 49 | ທ. ຄຳແພງ | 4 | 2 | |
| 50 | ທ. ແດງ | 3 | 1 | 15 |
| 51 | ທ. ພອງ | 2 | 1 | |
| 52 | ທ. ຂວງ | 1 | 1 | |
| 53 | ທ. ວັນເພັງ | 8 | 5 | 16 |
| 54 | ທ. ສຸ | 6 | 1 | |
| 55 | ທ. ສຸລິສັກ | 5 | 1 | |
| 56 | ທ. ວິໄລສຸກ | 8 | 7 | 17 |
| 57 | ທ. ໄຊ | 4 | 2 | |
| 58 | ທ. ກິງເພັດ | 3 | 1 | |
| 59 | ທ. ໄຊຊະນະ | 2 | - | |
| 60 | ທ. ວຽງຄຳ | 5 | 2 | 18 |
| 61 | ທ.ຫວັນ | 7 | 2 | |
| 62 | ທ.ແດນ | 4 | 1 | |
| 63 | ທ.ແສງກາ | 7 | 2 | 19 |
| 64 | ທ. ໝອນ | 5 | 1 | |
| 65 | ນ.ນິດ | 8 | 1 | |
| 66 | ທ.ສັກດາ | 9 | 4 | |
| 67 | ທ.ຄອນສັກ | 4 | 1 | 20 |
| | | | | |

## I. ໜ້າທີ່ໄລຍະເດີນສຳຫຼວດ

## ວິທີຈົດກ່າຍແບບສອບຖາມ

### ລະຫັດທີ່ຕັ້ງ:

- **ແຂວງ** : ໃຫ້ຂຽນຊື່ແຂວງ ແລະ ໃສ່ລະຫັດແຂວງ ຕາມບັນຊີທີ່ກົມສະຖິຕິໄດ້ກຳນົດໃຫ້.
- **ເມືອງ** : ໃຫ້ຂຽນຊື່ເມືອງ ແລະ ໃສ່ລະຫັດເມືອງ ຕາມບັນຊີທີ່ກົມສະຖິຕິໄດ້ກຳນົດໃຫ້.
- **ບ້ານ** : ໃຫ້ຂຽນຊື່ ບ້ານ ແລະ ຂຽນລະຫັດບ້ານຕາມບັນຊີທີ່ກົມສະຖິຕິກຳນົດໃຫ້.
- **ປະເພດບ້ານ:** ບ້ານທີ່ເປັນເຂດຕົວເມືອງ ຫຼື ຊົນນະບົດ ແມ່ນຂຶ້ນກັບ 5 ເງື່ອນໄຂຂ້າງລຸ່ມນີ້:

1. ມີທີ່ຕັ້ງຢູ່ເຫດສະບານເມືອງ ຫຼື ແຂວງ.
2. ມີເສັ້ນທາງລົດໃຫຍ່ໄປຮອດບ້ານທັງໃນລະດູຝົນ ແລະ ລະດູແລ້ງ.
3. ມີໄຟຟ້າຕໍ່ເຂົ້າໄປເຖິງ ແລະ ມີຄົນໃນບ້ານຊົມໃຊ້ໄຟຟ້າ 70% ຂຶ້ນໄປ ຫຼືເທົ່າກັບ 2/3 ຂອງບ້ານ.
4. ມີນ້ຳປະປາຕໍ່ເຂົ້າໄປເຖິງ ແລະມີຄົນໃນບ້ານນຳໃຊ້ນ້ຳປະປາ 70% ຂຶ້ນໄປ ຫຼື ເທົ່າກັບ 2/3 ຂອງບ້ານ.
5. ມີຕະຫລາດທີ່ມີການຊື້-ຂາຍຕະຫລອດວັນ.

ຖ້າບ້ານໃດຫາກມີ 3 ໃນ 5 ເງື່ອນໄຂ ໃຫ້ຖືວ່າບ້ານນັ້ນແມ່ນບ້ານຕົວເມືອງ ແລະ ໃຫ້ຈົດກ່າຍລະຫັດ “1” ສຳລັບບ້ານຊົນນະບົດ ແມ່ນໄດ້ ແຍກອອກເປັນ 2 ປະເພດບ້ານ, ບ້ານຊົນນະບົດມີເສັ້ນທາງລົດໃຫຍ່ເຂົ້າເຖິງແມ່ນ “2” ແລະ ຊົນນະບົດບໍ່ມີເສັ້ນທາງລົດໃຫຍ່ເຂົ້າເຖິງແມ່ນ “3”

## ຂໍ້ມູນກ່ຽວກັບຄົວເຮືອນ

| | |
|---|---|
| ຄຳຖາມ HH 1 | **ເລກທີຄົວເຮືອນຕົວແທນ** ແມ່ນເລກທີ່ຄົວເຮືອນຕົວແທນ ເຊິ່ງນັກເດີນສຳຫຼວດໄດ້ຄັດເລືອກໂດຍໃຊ້ວິທີການເລືອກຄົວເຮືອນຕົວແທນ ຕາມການແນະນຳໃນປຶ້ມຄູ່ມື ແລະ ຈາກການຝຶກອົບຮົມສຳລັບນັກເດີນສຳຫຼວດ ແລະ ນັກກວດກາ. |
| ຄຳຖາມ HH 2 | **ຊື່ ຫົວໜ້າຄົວເຮືອນ ?** ແມ່ນຜູ້ມີບົດບາດ ແລະ ໄດ້ຮັບຄວາມເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ທັງເປັນຜູ້ເບິ່ງແຍງສະຫວັດດີການ, ສາມາດກຳສະພາບທາງເສດຖະກິດ - ສັງຄົມຂອງສະມາຊິກຄົວເຮືອນ, ຫົວໜ້າຄົວເຮືອນ ອາດແມ່ນເພດຊາຍ ຫຼື ຍິງ. |
| ຄຳຖາມ HH 3 | ຊື່ ຜູ້ໃຫ້ສຳພາດຕໍ່ແບບສອບຖາມຄົວເຮືອນ ແມ່ນໃຫ້ຂຽນຊື່ຜູ້ໃຫ້ສຳພາດຕໍ່ແບບສອບຖາມ ພ້ອມທັງຂຽນເລກທີບຸກຄົນຈາກພາກບັນຊີລາຍຊື່ຄົວເຮືອນ ຄຳຖາມ (HL1) ອາດຈະແມ່ນຫົວໜ້າຄົວເຮືອນ ຫຼື ຜູ້ອື່ນທີ່ກຳສະພາບຂອງຄົວເຮືອນໄດ້ (ຖ້າຫົວໜ້າຄົວເຮືອນບໍ່ຢູ່) ແລະສາມາດໃຫ້ຂໍ້ມູນຕ່າງໆ ກ່ຽວກັບຄົວເຮືອນ ແລະສະມາຊິກຂອງຄົວເຮືອນໄດ້ຢ່າງຊັດເຈນ. ໃນກໍລະນີມີການໄປຖາມຫຼາຍເທື່ອແມ່ນໃຫ້ຈົດ ເອົາຊື່ຜູ້ຕອບຄຳຖາມເປັນຕົ້ນຕໍໃສ່. |
| ຄຳຖາມ HH 4 | ຊື່ ນັກເດີນສຳຫຼວດ ແມ່ນໃຫ້ຂຽນຊື່ແຈ້ງຂອງນັກເດີນສຳຫຼວດ ທີ່ໄປສຳພາດໃສ່. |
| ຄຳຖາມ HH 5 | ຊື່ ນັກກວດກາ ແມ່ນ ຊື່ຂອງນັກກວດກາພາກສະໜາມ ຫຼື ແມ່ນຜູ້ຕິດຕາມກວດກາ ແລະ ແນະນຳນັກເດີນໃນເວລາສຳຫຼວດຕົວຈິງ. |

| | |
|---|---|
| ລະຫັດຄຳຕອບຜົນໄດ້ຮັບຈາກການສຳພາດ<br>ສຳເລັດ ……………………………………………………………………1<br>ບໍ່ຢູ່ເຮືອນ ຫຼືບໍ່ມີຜູ້ທີ່ສາມາດໃຫ້ຄຳຕອບໄດ້ …………………………………………2<br>ເລື່ອນເວລາ……………………………………………………………………… 3<br>ປະຕິເສດ……………………………………………………………………4<br>ສຳເລັດບາງສ່ວນ……………………………………………………………5<br>ອື່ນໆ(ເວົ້າແຈ້ງ): ________________________________________ 6 | |
| ຄຳຖາມ HH 6 | ຜົນໄດ້ຮັບຈາກການສຳພາດຄົວເຮືອນ: ແມ່ນໃຫ້ຂຽນວັນທີ, ເດືອນ, ປີ ທີ່ທ່ານສຳພາດ ແລະໃຫ້ຂຽນຜົນໄດ້ຮັບຈາກ (ລະຫັດຄຳຕອບຜົນໄດ້ຮັບຈາກການສຳພາດ) ຂ້າມເທິງໃສ່ ຖ້າການສຳພາດບໍ່ສຳເລັດແມ່ນຕ້ອງໄດ້ນັດພົບກັບຄົວເຮືອນເພື່ອສຳພາດຄືນໃໝ່ ຫຼັງຈາກນັ້ນ, ໃຫ້ໝາຍ ຜົນໄດ້ຮັບຈາກ (ລະຫັດຄຳຕອບຜົນໄດ້ຮັບຈາກການສຳພາດ) ໃສ່ຕາມທີ່ລົງສຳພາດຕົວຈິງ |
| ຄຳຖາມ HH 7 | ຈຳນວນສະມາຊິກໃນຄົວເຮືອນ: ແມ່ນໃຫ້ບັນທຶກຈຳນວນຄົນຕົວຈິງທັງຫມົດໃນຄົວເຮືອນໃສ່, ໂດຍອີງຕາມຈຳນວນຄົນໃນພາກບັນຊີລາຍຊື່ຄົວເຮືອນ HL1. |
| ຄຳຖາມ HH 8 | ຈຳນວນເດັກອາຍຸ 5 ຫາ 17 ປີໃນຄົວເຮືອນ: ແມ່ນໃຫ້ຂຽນຈຳນວນເດັກຕົວຈິງໃນຄົວເຮືອນທີ່ມີອາຍຸ 5 ຫາ 17 ປີ ໂດຍອີງຕາມຄຳຖາມ HL6. |
| ໃຫ້ນັກເດີນສຳຫຼວດບັນທຶກເວລາທີ່ເລີ້ມຕົ້ນສຳພາດ ແລະ ເວລາສິ້ນສຸດການສຳພາດລົງໃສ່ ຕົວຢ່າງ: ເວລາເລີ້ມຕົ້ນແມ່ນ 9:10 ແລະ ເວລາສຳເລັດການສຳພາດແມ່ນ 11:20 (ກໍລະນີໄປສຳພາດຫຼາຍເທື່ອແມ່ນບໍ່ບັນທຶກເວລາ) | |
| ຖ້າໄດ້ຕື່ມແບບສອບຖາມແມ່ນບັນທຶກຈຳນວນແບບສອບຖາມໃສ່ ມີຈຳນວນເພີ່ມເທົ່າໃດສຳລັບຄົວເຮືອນນີ້. | |
| ຊື່ ນັກກວດກາສູນກາງ ແມ່ນເຂົາເຈົ້າຈະເປັນຜູ້ຂຽນໃສ່ເວລາກວດແກ້ຂໍ້ມູນ. | |
| ຊື່ຜູ້ປ້ອນຂໍ້ມູນ ແມ່ນຜູ້ປ້ອນຂໍ້ມູນຂອງກົມສະຖິຕິເຂົາເຈົ້າຈະຂຽນໃສ່ໃນເວລາປ້ອນຂໍ້ມູນເຂົ້າຈັກຄອມພິວເຕີ. | |

## ພາກທີ I: ຂໍ້ມູນກ່ຽວກັບສະມາຊິກຄົວເຮືອນໝົດທຸກຄົນ

| | |
|---|---|
| ຄຳຖາມ HL 1 | ເລກທີບຸກຄົນ ແມ່ນເລກລຳດັບຂອງຄົນໃນຄົວເຮືອນ (ຈົ່ງກວດຄືນຂໍ້ມູນກ່ຽວກັບສະມາຊິກຂອງຄົວເຮືອນ ວ່າທັງຫມົດມີຈັກຄົນ ແລະ ຄົບຖ້ວນແລ້ວ). |
| ຄຳຖາມ HL 2 | ຊື່ ແມ່ນໃຫ້ຂຽນຊື່ເຕັມຂອງສະມາຊິກຄົວເຮືອນໂດຍເລີ່ມ ຈາກຫົວໜ້າຄົວເຮືອນເປັນຄົນທຳອິດ, ຫລັງຈາກນັ້ນແມ່ນຊື່ ຜົວ/ເມຍ, ລູກຜູ້ທີ່ມີອາຍຸຫລາຍກວ່າໝູ່ ໃນຄົວເຮືອນຈົນຮອດລູກຄົນສຸດທ້າຍ, ຫລັງຈາກນັ້ນ ໃຫ້ຂຽນຊື່ພໍ່, ແມ່, ພໍ່ເຖົ້າ, ແມ່ເຖົ້າ, ພີ່ນ້ອງ ແລະ ຄົນອື່ນໆ ທີ່ອາໃສ່ຢູ່ນຳຄົວເຮືອນ. ໝາຍເຖິງຄົນ ທີ່ຢູ່ເປັນປົກກະຕິ ຫຼື ຢູ່ເປັນປະຈຳໃນຄົວເຮືອນ ຫ້າມບໍ່ໃຫ້ຂຽນຊື່ຫຍໍ້ ຫຼື ຊື່ທີ່ເອີ້ນຕາມຊື່ຂອງລູກ. ຕົວຢ່າງ: ພໍ່ນາງດຳ, ແມ່ທ້າວແສງ... |

<table>
<tr><td>ຄຳຖາມ HL 3</td><td>ສາຍພົວພັນກັບຫົວໜ້າຄົວເຮືອນແນວໃດ? ໝາຍເຖິງ ສະມາຊິກໃນຄົວເຮືອນ ທີ່ມີສາຍພົວພັນກັບຜູ້ເປັນຫົວໜ້າຄົວເຮືອນ ແລະໃຫ້ຂຽນລະຫັດສາຍພົວພັນກັບຫົວໜ້າຄົວເຮືອນ ເຊັ່ນ: 01 ຫົວໜ້າຄົວເຮືອນ, 02 ຜົວ/ເມຍ ຂອງຫົວໜ້າຄົວເຮືອນ, 03 ລູກຊາຍ/ລູກສາວ, 04 ອ້າຍ, ເອື້ອຍ/ນ້ອງສາວ, 05 ລູກໄພ້/ລູກເຂີຍ, 06 ຫລານ(ລູກຂອງລູກ), 07 ຫລາຍສາວ/ຫລານຊາຍ, 08 ລູກນ້າ(ລູກຕິດຜົວ/ເມຍ), 09 ພໍ່ແມ່/ພໍ່ເຖົ້າ, ແມ່ເຖົ້າ, 10 ຄົນຮັບໃຊ້, 11 ພີ່ນ້ອງ, 12 ຄົນອື່ນໆ ບໍ່ແມ່ນພີ່ນ້ອງ.<br>ຕົວຢ່າງ:<br>
<table>
<tr><td>ເລກທີ່ບຸກຄົນ</td><td>ຊື່ ແມ່ນໃຫ້ຂຽນຊື່ເຕັມໂດຍເລີ້ມ ຈາກຫົວໜ້າຄົວເຮືອນເປັນຄົນ ທຳ ອິດ, ຫລັງຈາກນັ້ນເມຍ/ຜົວ, ລູກຜູ້ທີ່ມີອາຍຸຫລາຍກວ່າໝູ່ໃນຄົວເຮືອນຈົນຮອດລູກຄົນ ສຸດທ້າຍ, ຫລັງຈາກ ນັ້ນໃຫ້ຂຽນຊື່ພໍ່ແມ່, ພໍ່ເຖົ້າແມ່ເຖົ້າ, ພີ່ນ້ອງ ແລະຄົນອື່ນໆ ທີ່ອາໃສ່ຢູ່ນຳຄົວເຮືອນ.</td><td>ທ່ານມີສາຍພົວພັນແນວໃດກັບຫົວໜ້າຄົວເຮືອນ?</td><td>ເພດ ?<br>1. ຊາຍ<br>2. ຍິງ</td></tr>
<tr><td>HL1</td><td>HL2</td><td>HL3</td><td>HL4</td></tr>
<tr><td>01</td><td>ທ ບຸນຄຳ</td><td>01</td><td>(1) 2</td></tr>
<tr><td>02</td><td>ນ ແສງ</td><td>02</td><td>1 (2)</td></tr>
<tr><td>03</td><td>ນ ແດງ</td><td>03</td><td>1 (2)</td></tr>
<tr><td>04</td><td>ທ ນຳ</td><td>03</td><td>(1) 2</td></tr>
<tr><td>05</td><td>ທ ດຳ</td><td>03</td><td>(1) 2</td></tr>
<tr><td>06</td><td>ນ ສີປະເສີດ</td><td>04</td><td>1 (2)</td></tr>
</table>
</td></tr>
<tr><td>ຄຳຖາມ HL 4</td><td>ເພດ: ແມ່ນໃຫ້ນັກເດີນສຳຫຼວດເບິ່ງຕາມຄຳຖາມ HL2 ທີ່ຂຽນຊື່ທ້າວ ຫຼື ນາງແລ້ວໃຫ້ຂີດວົງມົນອ້ອມເອົາຈຳນວນສະມາຊິກຄົວເຮືອນທັງໝົດເປັນເພດຍິງ ຫຼື ເພດຊາຍ.</td></tr>
<tr><td>ຄຳຖາມ HL 5</td><td>ອາຍຸປີເຕັມ ? ແມ່ນໃຫ້ສົມທຽບວັນທີ, ເດືອນ, ປີ ສຳພາດ ກັບວັນທີ, ເດືອນ, ປີເກີດ ແລ້ວຄິດໄລ່ອາຍຸປີເຕັມໃສ່ ວິທີຂຽນແມ່ນໃຫ້ຂຽນຈຳນວນເລກເຕັມເຊັ່ນ: 10, 25, 30, 49 ເປັນຕົ້ນ, ໂດຍຖືເອົາມື້ສຳຫຼວດຕົວຈິງເປັນຫລັກ, ບໍ່ໃຫ້ມີເລກຈຸດ. ຖ້າເດັກນ້ອຍບໍ່ຮອດ 1 ປີ ແມ່ນ ໃຫ້ຂຽນ 0. ໃນກໍລະນີບໍ່ຈື່ ແມ່ນເບິ່ງຕາມປື້ມສຳມະໂນຄົວ ແລະໃຫ້ສົມທຽບໃສ່ຄົນລຸ້ນລາວຄາວດຽວກັນກັບຄົນຢູ່ໃນບ້ານ (ຕາຕະລາງຄິດໄລ່ອາຍຸຕາມປີເກີດຂອງປີປະຕິທິນປີສັດ, ແມ່ນ ໃຫ້ເບິ່ງໃນເອກະສານຊ້ອນທ້າຍຂອງປຶ້ມຄູ່ ມືນີ້).</td></tr>
<tr><td>ຄຳຖາມ HL 6</td><td>ໃຫ້ຂີດວົງມົນອ້ອມເອົາເລກທີ່ບຸກຄົນສະເພາະເດັກທີ່ມີອາຍຸ 5-17 ປີໃນຄົວເຮືອນ.</td></tr>
</table>

<table>
<tr><td>ຄຳຖາມ HL 7</td><td>ສະພາບສົມລົດ ? ແມ່ນສະພາບການສົມລົດໃນປະຈຸບັນຂອງສະມາຊິກຄົວເຮືອນທຸກຄົນ ທີ່ມີອາຍຸ 12 ປີ ຂຶ້ນໄປໃຫ້ຂີດວົງມົນອ້ອມ ເອົາຕາມລະຫັດຄຳຕອບທີ່ຢູ່ໃນແບບສອບຖາມເຊັ່ນ:<br>1. ແຕ່ງງານ ປະຈຸບັນບຸກຄົນດັ່ງກ່າວ ຢູ່ກິນຮ່ວມກັນລະຫວ່າງຜົວ ແລະ ເມຍ.<br>2. ບໍ່ເຄີຍແຕ່ງງານ ແມ່ນບຸກຄົນດັ່ງກ່າວຍັງໂສດ, ໃນຊີວິດຂອງບຸກຄົນນັ້ນຍັງມາເຄີຍແຕ່ງງານມາກ່ອນ.<br>3. ແຕ່ງງານແລ້ວແຕ່ແຍກກັນຢູ່ ແມ່ນຄູ່ຜົວເມຍດັ່ງກ່າວໄດ້ແຍກກັນຢູ່ ໂດຍບໍ່ໄດ້ມີການ ບັນທຶກ ຫຼື ໜັງສືຢັ້ງຢືນຢ່າຮ້າງເປັນທາງ.<br>4. ຢູ່ກິນຮ່ວມກັນ ແມ່ນຄູ່ຜົວ ຫຼື ເມຍ ບໍ່ໄດ້ເຮັດພິທີແຕ່ງງານຕາມຮີດຄອງປະເພນີ ແຕ່ດຳລົງຊີວິດຮ່ວມກັນມາແລ້ວ.<br>5. ຢ່າຮ້າງກັນ ແມ່ນໄດ້ມີການຮັບຮູ້, ບັນທຶກ ຫຼື ມີໜັງສືຢ່າຮ້າງ ຈາກອຳນາດການປົກຄອງບ້ານ.<br>6. ເປັນໝ້າຍ ແມ່ນຄູ່ຜົວ, ເມຍ ມີບຸກຄົນໃດບຸກຄົນໜຶ່ງໄດ້ເສຍຊີວິດແລ້ວ.<br>ຕົວຢ່າງ:<br>
<table>
<tr><th>HL7</th></tr>
<tr><td>1 2 (1) 4 5 6</td></tr>
<tr><td>1 2 (1) 4 5 6</td></tr>
<tr><td>1 2 3 (2) 5 6</td></tr>
<tr><td>1 2 3 4 5 6 (6)</td></tr>
</table>
</td></tr>
<tr><td>ຄຳຖາມ HL 8</td><td>ຂຽນເລກທີແມ່ຄີງຂອງເດັກອາຍຸ 5-17 ປີ ໂດຍອີງຕາມ (HL1) ຖ້າແມ່ຄີງຍັງເປັນສະມາຊິກຄົວເຮືອນ. ຖ້າແມ່ຄີງບໍ່ແມ່ນສະມາຊິກຄົວເຮືອນໃຫ້ຂຽນ 99.</td></tr>
<tr><td>ຄຳຖາມ HL 9</td><td>ຂຽນເລກທີພໍ່ຄີງຂອງເດັກອາຍຸ 5-17 ປີ ໂດຍອີງຕາມ (HL1) ຖ້າພໍ່ຄີງຍັງເປັນສະມາຊິກຄົວເຮືອນ. ຖ້າພໍ່ຄີງບໍ່ແມ່ນສະມາຊິກຄົວເຮືອນໃຫ້ຂຽນ 99.</td></tr>
</table>

## **ພາກ 2: ການສຶກສາສຳລັບສະມາຊິກຄົວເຮືອນທີ່ມີອາຍຸ 5 ປີຂຶ້ນໄປ.**

ໃນພາກນີ້ແມ່ນຖາມກ່ຽວກັບການສຶກສາຂອງສະມາຊິກຄົວເຮືອນ ທຸກຄົນທີ່ມີອາຍຸ 5-64 ປີ ໃຫ້ກວດເບິ່ງ ພາກທີ I ຂໍ້ມູນກ່ຽວກັບສະມາຊິກຄົວເຮືອນໝົດທຸກຄົນ ໃນຄຳຖາມ HL5 ອາຍຸປີເຕັມ ຫລັງຈາກນັ້ນຂຽນເລກ ທີ່ບຸກຄົນດັ່ງກ່າວລົງໃສ່.

| | |
|---|---|
| ຄຳຖາມ ED1 | ທ່ານ ສາມາດອ່ານ ແລະ ຂຽນພາສາລາວໄດ້ບໍ່ ? ໃນຄຳຖາມນີ້ ແມ່ນຢາກຮູ້ວ່າ ສະມາຊິກຄົວເຮືອນອາຍຸ 5-64 ປີ ແຕ່ລະຄົນສາມາດອ່ານ ແລະຂຽນພາສາລາວໄດ້ບໍ່ ຖ້າຄົວເຮືອນບໍ່ບອກ ໃຫ້ນັກເດີນສຳຫຼວດເອົາແບບສອບຖາມ ຫຼື ປຶ້ມຄູ່ມືໃຫ້ອ່ານ ແລ້ວບັນທຶກເອົາລະຫັດຄຳຕອບທີ່ຖືກຕ້ອງລົງໃສ່. |
| ຄຳຖາມ ED2 | ທ່ານເຄີຍເຂົ້າໂຮງຮຽນບໍ່ ? ໃນຄຳຖາມນີ້ແມ່ນ ຖາມເຖິງສະມາຊິກຄົວເຮືອນ 5-64 ປີ ໄດ້ເຄີຍເຂົ້າໂຮງຮຽນທີ່ມີລະບົບການສິດສອນເປັນປົກກະຕິ ແລະມີຫລັກສູດຂອງການສິດສອນຄັກແນ່ ຫຼື ບໍ ? ຄຳຕອບ 1 ເຄີຍ; 2 ບໍ່ເຄີຍ; ຖ້າຕອບ 2 ບໍ່ເຄີຍ ແມ່ນໃຫ້ຂ້າມໄປ ຄຳຖາມ ED6 |
| ຄຳຖາມ ED3 | ທ່ານເລີ່ມເຂົ້າໂຮງຮຽນຕອນອາຍຸຈັກປີ ? ແມ່ນ ເວລາທີ່ທ່ານເລີ້ມເຂົ້າໂຮງຮຽນທຳອິດ ອາຍຸຂອງທ່ານໄດ້ຈັກປີ ບັນທຶກອາຍຸປີໃສ່. *(ສ່ວນຜູ້ທີ່ຮຽນຢູ່ຊັ້ນອານຸບານແມ່ນຈະບໍ່ຖາມຄຳຖາມນີ້)* |
| ຄຳຖາມ ED4 | ໃນສົກຮຽນປະຈຸບັນທ່ານກຳລັງເຂົ້າໂຮງຮຽນຢູ່ບໍ່ ? ແມ່ນສົກຮຽນ (2010-2011) ສະມາຊິກໃນຄົວເຮືອນກຳລັງຮຽນໜັງສື ແລະໄດ້ໄປໂຮງຮຽນເປັນປົກກະຕິ. ຖ້າໄດ້ເຂົ້າ ຫຼື ກຳລັງຮຽນຢູ່ ແມ່ນໃຫ້ຂີດວົງມົນອ້ອມເອົາ 1, ຖ້າບໍ່ໄດ້ເຂົ້າແມ່ນຂີດວົງມົນອ້ອມເອົາ 2, ແລ້ວຂ້າມໄປຄຳຖາມ ED7 |
| ຄຳຖາມ ED5 | ປະຈຸບັນ ທ່ານ ກຳລັງຮຽນຢູ່ຊັ້ນໃດ, ຫ້ອງໃດ ? ຖ້າບຸກຄົນໃດໜຶ່ງ ໃນຄົວເຮືອນຖ້າຍັງເຂົ້າໂຮງຮຽນຢູ່ໃນສົກຮຽນປະຈຸບັນນີ້ (2010-2011) ແມ່ນໃຫ້ບັນທຶກຊັ້ນ ແລະ ຫ້ອງຮຽນທີ່ບຸກຄົນດັ່ງກ່າວຮຽນຢູ່ ເຖິງແມ່ນວ່າເວລາລົງສຳຫຼວດຈະຖືກຊ່ວງພັກໂຮງຮຽນກໍ່ຕາມ ຖືວ່າບຸກຄົນດັ່ງກ່າວກຳລັງຮຽນຢູ່ ຕົວຢ່າງ: ບຸກຄົນດັ່ງກ່າວ ກຳລັງຮຽນຢູ່ຊັ້ນປະຖົມ ປີທີ 4, ຊັ້ນຮຽນແມ່ນໃຫ້ຂີດວົງມົນອ້ອມເອົາເລກ 1 ຄື ຊັ້ນປະຖົມ ແລະຫ້ອງໃຫ້ຂຽນ 14 ຕາມລະຫັດຄຳຕອບໃນແບບສອບຖາມ ED5. *ຖ້າຊັ້ນສູງກວ່າມະຫາວິທະຍາໄລແມ່ນບໍ່ໃຫ້ໃສ່ຫ້ອງຮຽນ.* |

ຕົວຢ່າງ: ວິທີການໝາຍຄຳຕອບໃນ

| ເລກທີບຸກຄົນ | ທ່ານ ສາມາດອ່ານ ແລະ ຂຽນພາສາລາວ ໄດ້ບໍ່?<br>1. ໄດ້<br>2. ບໍ່ໄດ້ | ທ່ານເຄີຍເຂົ້າໂຮງຮຽນບໍ່?<br>1. ເຄີຍ<br>2. ບໍ່ເຄີຍ ➪ ຂ້າມໄປຄໍາຖາມ ED6 | ທ່ານເລີ້ມເຂົ້າໂຮງຮຽນປະຖົມ ຕອນອາຍຸຈັກປີ ? | ໃນສົກຮຽນປະຈຸບັນທ່ານກໍາລັງເຂົ້າຮຽນຢູ່ບໍ່ ?<br>1. ກໍາລັງຮຽນ<br>2. ບໍ່ໄດ້ຮຽນ➪ ຂ້າມໄປຄໍາຖາມED7 | ປະຈຸບັນ ທ່ານກໍາລັງຮຽນຢູ່ຊັ້ນໃດ ແລະ ຫ້ອງໃດ ?<br>***(ສໍາລັບຊັ້ນຮຽນ ແລະ ຫ້ອງເບິ່ງລະຫັດຢູ່ຂ້າງເທິງ)***<br>***ແລ້ວສິ້ນສຸດການສໍາພາດສໍາລັບບຸກຄົນນີ້***<br>ຊັ້ນຮຽນ | ຫ້ອງ |
|---|---|---|---|---|---|---|
| | **ED1** | **ED2** | **ED3** | **ED4** | **ED5** | |
| 01 | (1) 2 | (1) 2 | *8* | 1 (2) | 0 1 2 3 4 5 6 7 8 9 | __ __ |
| 02 | 1 (2) | 1 (2) | | 1 2 | 0 1 2 3 4 5 6 7 8 9 | __ __ |
| 03 | (1) 2 | (1) 2 | *6* | (1) 2 | 0 1 2 (3) 4 5 6 7 8 9 | 3 3 |
| 04 | 1 (2) | (1) 2 | *10* | (1) 2 | 0 (1) 2 3 4 5 6 7 8 9 | 1 1 |
| 05 | (1) 2 | (1) 2 | *6* | (1) 2 | 0 1 2 3 4 5 6 (7) 8 9 | 7 3 |

| | |
|---|---|
| ຄໍາຖາມ ED6 | ຍ້ອນເຫດຜົນຕົ້ນຕໍອັນໃດ ທ່ານຈິ່ງບໍ່ໄດ້ເຂົ້າໂຮງຮຽນ ? ຖ້າທ່ານບໍ່ເຄີຍເຂົ້າໂຮງຮຽນ ຫຼື ຕອບ 2 ໃນຄໍາຖາມ ED2 ຈິ່ງບອກເຫດຜົນຕົ້ນຕໍ ທີ່ທ່ານບໍ່ສາມາດເຂົ້າໂຮງຮຽນໃນເວລານັ້ນ ເຊັ່ນ: 1 ຍັງນ້ອຍ, 2 ພິການ ຫຼື ເຈັບປ່ວຍ, 3 ບໍ່ມີໂຮງຮຽນ ຫຼື ໂຮງຮຽນຢູ່ໄກ, 4 ຄົວເຮືອນບໍ່ສາມາດໃຊ້ຈ່າຍໃນການຮຽນ... ຕາມລະຫັດຄໍາຕອບໃນ ED6, ແລ້ວຂ້າມໄປຄໍາຖາມ ED10.<br>ຕົວຢ່າງ: (*ໃນຄໍາຖາມນີ້ແມ່ນສາມາດຕອບໄດ້ຄໍາຕອບດຽວຄືເຫດຜົນຫລັກໆ*).<br>**ED5**<br>(1) 2 3 4 5 6 7 8 9 10 11 ____________________<br>1 2 3 (4) 5 6 7 8 9 10 11 ____________________<br>1 2 (3) 4 5 6 7 8 9 10 11 ____________________<br>ຖ້າມີຄໍາຕອບໃນຄໍາຖາມນີ້ ແມ່ນຂ້າມໄປຄໍາຖາມED10. |
| ຄໍາຖາມ ED7 | ຍ້ອນຫຍັງໃນປະຈຸບັນນີ້ທ່ານ ຈິ່ງບໍ່ໄດ້ເຂົ້າໂຮງຮຽນ ? ໃນຄໍາຖາມນີ້ ແມ່ນຈະຖາມສໍາລັບຜູ້ທີ່ເຄີຍເຂົ້າໂຮງຮຽນ ແຕ່ບໍ່ໄດ້ເຂົ້າໂຮງຮຽນ ໃນສົກຮຽນປະຈຸບັນນີ້ (2010 - 2011) ຍ້ອນຫຍັງບຸກຄົນດັ່ງກ່າວຈິ່ງບໍ່ໄດ້ເຂົ້າໂຮງຮຽນ. ຕອບໄດ້ຄໍາຕອບດຽວ *(ຈະບໍ່ຖາມບຸກຄົນທີ່ກໍາລັງຮຽນຢູ່)* |

| | |
|---|---|
| ຄຳຖາມ ED8 | ລະດັບການສຶກສາສູງສຸດທີ່ທ່ານຮຽນຈົບແມ່ນ ຊັ້ນໃດ ແລະຫ້ອງໃດ? ແມ່ນລະດັບການສຶກສາທີ່ບຸກຄົນດັ່ງກ່າວຮຽນຈົບຜ່ານມາ, ໃຫ້ບັນທຶກເອົາຊັ້ນ ແລະຫ້ອງຮຽນທີ່ລາວຮຽນຈົບໃສ່.<br>ຕົວຢ່າງ: 1. ທ້າວ ກ ຮຽນຈົບມໍ 2 (ຊຶ່ງວ່າລາວໄດ້ເສັງຈົບຊັ້ນມໍ 2 ແລ້ວ ແລະໄດ້ຂຶ້ນມໍ 3 ແຕ່ບໍ່ທັນຈົບ ຫລັງຈາກນັ້ນລາວໄດ້ອອກໂຮງຮຽນ) ສະນັ້ນ, ຊັ້ນທີ່ລາວຮຽນຈົບ ແມ່ນຊັ້ນມັດທະຍົມຕອນຕົ້ນ (ມໍ2) ໃຫ້ໝາຍ 2 ແລະຫ້ອງຮຽນແມ່ນຂຽນ22.<br>2. ທ້າວ ຂ ຮຽນຈົບມະຫາວິທະຍາໄລ ຊຶ່ງລະບົບຮຽນແມ່ນ 5 ປີ, ຊັ້ນແມ່ນໃຫ້ໝາຍ 7 ແລະ ຫ້ອງຮຽນແມ່ນໃຫ້ຂຽນ 75. |
| ຄຳຖາມ ED9 | ເວລາທ່ານອອກໂຮງຮຽນ ຫຼື ຮຽນຈົບອາຍຸຂອງທ່ານໄດ້ຈັກປີ ? ໃນຄຳຖາມນີ້ ແມ່ນຢາກຮູ້ ກ່ຽວກັບ ອາຍຸຂອງແຕ່ລະຄົນທີ່ຮຽນຈົບ ໂດຍປົກກະຕິແມ່ນ: ຊັ້ນອານຸບານ, ຊັ້ນປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ... ອາຍຸທີ່ບຸກຄົນດັ່ງກ່າວຮຽນຈົບ ຫຼື ອອກໂຮງຮຽນກໍຕາມໃນເວລານັ້ນອາຍຸບຸກຄົນດັ່ງກ່າວໄດ້ຈັກປີ. ໃຫ້ບັນທຶກອາຍຸ ປີ ທີ່ລາວຮຽນຈົບໃສ່. |

ຕົວຢ່າງ:

| ຍ້ອນຫຍັງ ໃນປະຈຸບັນນີ້ ທ່ານ ຈຶ່ງບໍ່ໄດ້ເຂົ້າໂຮງຮຽນ ? *ສາມາດຕອບໄດ້ຫລາຍຄຳຕອບ* | ລະດັບການສຶກສາສູງສຸດທີ່ທ່ານ ຮຽນຈົບ ແມ່ນ ຊັ້ນໃດ ແລະ ຫ້ອງໃດ? ຊັ້ນຮຽນ | ຫ້ອງຮຽນ | ເວລາທ່ານອອກໂຮງຮຽນ ຫຼື ຮຽນຈົບອາຍຸຂອງທ່ານ ໄດ້ຈັກປີ? |
|---|---|---|---|
| ED7 | ED8 | | ED9 |
| (1) 2 3 4 5 6 7 8 9 10______________ | 0 (1) 2 3 4 5 6 7 8 9 | 1 5 | 1 4 |
| 1 (2) 3 4 5 6 7 8 (9) 10______________ | 0 1 (2) 3 4 5 6 7 8 9 | 2 2 | 1 6 |
| 1 2 3 (4) 5 6 7 8 9 10______________ | 0 (1) 2 3 4 5 6 7 8 9 | 1 1 | 8 |
| 1 2 3 4 (5) 6 7 8 9 10______________ | 0 1 2 (3) 4 5 6 7 8 9 | 3 1 | 1 7 |

| | |
|---|---|
| ຄຳຖາມ ED10 | ປະຈຸບັນ ທ່ານກຳລັງຝຶກອົບຮົມ ຫຼື ເຄີຍໄດ້ຮັບການຝຶກອົບຮົມວິຊາອາຊີບ, ການແນະນຳດ້ານໃດໜຶ່ງບໍ່? ແມ່ນການຝຶກອົບຮົມ ທີ່ມີຫລັກສູດ ຫຼື ບໍ່ມີຫລັກສູດຂອງການຝຶກອົບຮົມ ຫຼື ການແນະນຳຈາກອົງການ ຫຼື ພາກສ່ວນກ່ຽວຂ້ອງ, ເຖິງແມ່ນວ່າຊ່ວງໄລຍະຂອງການຝຶກອົມຮົມ ຫຼື ການແນະນຳນັ້ນຈະສັ້ນກໍຕາມ, ຖືວ່າບຸກຄົນດັ່ງກ່າວໄດ້ຮັບການຝຶກອົບຮົມ ຫຼື ການແນະນຳເປັນຕົ້ນແມ່ນ: ຝຶກອົມຮົມປຸງແຕ່ງອາຫານ, ເສີມສວຍ, ຕັດຜົມ, ສ້ອມແປງລົດ, ຂັບລົດ, ຕັດ ຫຍິບ, ຕຳຫູກ, ກໍ່ສ້າງ, ສ່ຽນໂລຫະ, ສ່ຽນໄມ້,ຈອດໂລຫະ... |

| | |
|---|---|
| ຄຳຖາມ ED11 | ທ່ານເຄີຍໄດ້ຮັບການຝຶກອົບຮົມວິຊາຊີບ, ການແນະນຳ ດ້ານໃດແດ່ຜ່ານມາ ? ໃນຄຳຖາມນີ້ ແມ່ນຢາກຮູ້ກ່ຽວກັບ ການຝຶກອົບຮົມ, ການແນະນຳ ກ່ຽວກັບວິຊາຊີບທີ່ບຸກຄົນດັ່ງກ່າວເຄີຍໄດ້ຮັບຜ່ານມາ, ເຖິງແມ່ນວ່າລາວ ບໍ່ໄດ້ເຮັດວຽກກ່ຽວກັບວິຊາຊີບ ທີ່ລາວຝຶກອົມຮົມ ແລະໄດ້ຮັບການແນະນຳ ມາກໍຕາມ, ໃຫ້ໝາຍວົງມົນເອົາຄຳຕອບ ຕາມລະຫັດຄຳຕອບທີ່ລາວໄດ້ຝຶກອົບຮົມມາ. *ໃນຄຳຖາມນີ້ສາມາດໝາຍໄດ້ຫລາຍຄຳຕອບ.* |
| ຄຳຖາມ ED12 | ຫ້ອງການ ຫຼື ອົງການຮັບຜິດຊອບຝຶກອົບຮົມ, ການແນະນຳນັ້ນ ໄດ້ໃຫ້ໃບຢັ້ງຢືນເປັນທາງການບໍ່? ໃນຄຳຖາມນີ້ ແມ່ນ ຢາກຮູ້ກ່ຽວກັບການຝຶກອົບຮົມ ແລະການແນະນຳນັ້ນມີໃບຢັ້ງຢືນ ເພື່ອຢັ້ງຢືນວ່າບຸກຄົນດັ່ງກ່າວ ໄດ້ຮັບການຝຶກອົມຮົມວິຊາຊີບມາແລ້ວ ຖ້າມີ ໃຫ້ຕອບ 1; ຖ້າບໍ່ມີໃຫ້ຕອບ 2 ເພື່ອເປັນຫລັກຖານ. |
| ຄຳຖາມ ED13 | ວິຊາຊີບຕົ້ນຕໍທີ່ໄດ້ຝຶກອົມຮົມ, ການແນະນຳນັ້ນແມ່ນວິຊາຊີບຫັຍງ ? ໃນຄຳຖາມນີ້ ແມ່ນ ຢາກຮູ້ກ່ຽວກັບວິຊາຊີບຕົ້ນຕໍທີ່ລາວໄດ້ຝຶກອົບຮົມ, ການແນະນຳ ແລະ ສາມາດນຳມາໃຊ້ໃນການປັບປຸງຊີວິດການເປັນຢູ່ຂອງຕົນເອງ ແລະຄົວເຮືອນໃຫ້ດີຂຶ້ນ ເຖິງວ່າຈະເຄີຍໄດ້ຮັບການຝຶກອົບຮົມຜ່ານມາ ຫລາຍຢ່າງກໍຕາມ ແມ່ນໃຫ້ຂຽນລະຫັດວິຊາຊີບຕົ້ນຕໍຈາກຄຳຖາມ ED11 ມາໃສ່, *(ໃຫ້ຂຽນລະຫັດຄຳຕອບວິຊາຊີບຕົ້ນຕໍ ແລະສຳຄັນພຽງຄຳຕອບດຽວໃສ່).* |
| ຄຳຖາມ ED14 | ໄລຍະເວລາໃນການຝຶກອົບແມ່ນແນວໃດ? ໃຫ້ບັນທຶກໄລຍະເວລາ ຂອງການຝຶກອົບຮົມວິຊາຊີບຕົ້ນຕໍ ແລະສຳຄັນ ທີ່ລາວໄດ້ຮັບການຝຶກອົບຮົມຜ່ານມາໃນຄຳຖາມ ED13, ແລ້ວຂີດວົງມົນອ້ອມເອົາໄລຍະເວລາ ທີ່ໄດ້ຝຶກອົບຮົມເຊັ່ນ: 1. ຕ່ຳກວ່າ 1 ອາທິດ; 2. 1 ຫາ 2 ອາທິດ; 3. 1 ເດືອນ; 4. ຫລາຍກວ່າ 1 ເດືອນ. *(ໃຫ້ໝາຍເອົາພຽງຄຳຕອບດຽວ).* |

ຕົວຢ່າງ:

| ປະຈຸບັນທ່ານກຳລັງຝຶກອົບ ຮົມ ຫຼືເຄີຍໄດ້ຮັບການຝຶກ ອົບຮົມວິຊາອາຊີບ, ການແນະນຳ ໃດໜຶ່ງບໍ່?<br>1. ເຄີຍ<br>2. ບໍ່ເຄີຍ ➔ ຂ້າມໄປພາກIII | ທ່ານເຄີຍໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ການແນະນຳດ້ານໃດຜ່ານມາ? (ເປັນຕົ້ນແມ່ນ.........<br>***(ສຳລັບລະຫັດຄຳຕອບແມ່ນຢູ່ຂ້າງເທິງ)***<br>*ສາມາດຕອບໄດ້ຫລາຍຄຳຕອບ* | ຫ້ອງການ ຫຼື ອົງການຮັບຜິດຊອບຝຶກອົບຮົມໄດ້ໃຫ້ໃບຢັ້ງຢືນເປັນທາງການບໍ່?<br>1. ໄດ້ໃຫ້<br>2. ບໍ່ໄດ້ໃຫ້ | ວິຊາຊີບຫລັກທີ່ໄດ້ຝຶກອົບຮົມນັ້ນແມ່ນວິຊາຊີບຫັຍງ ?<br>*(ໃຫ້ບັນທຶກລະຫັດຄຳຕອບຈາກຄຳຖາມ ED11ໃສ່)* | ໄລຍະເວລາໃນການຝຶກອົບແມ່ນແນວໃດ?<br>1. ຕ່ຳກວ່າ 1 ອາທິດ<br>2. 1 ຫາ 2 ອາທິດ<br>3. 1 ເດືອນ<br>4. ຫລາຍກວ່າ 1 ເດືອນ |
|---|---|---|---|---|
| **ED10** | **ED11** | **ED12** | **ED13** | **ED14** |
| (1) 2 | 1 2 3 (4) 5 6 7 8 (9) 10 11 12 13_______ | (1) 2 | *9* | 1 2 (3) 4 |
| 1 (2) | 1 2 3 4 5 6 7 8 9 10 11 12 13_______ | 1 2 | | 1 2 3 4 |
| (1) 2 | 1 2 3 4 5 6 (7) 8 9 10 11 12 13_______ | 1 (2) | *7* | 1 2 3 (4) |

**ພາກທີ III: ສະຖານະພາບ ທາງດ້ານເສດຖະກິດ ຂອງສະມາຊິກຄົວເຮືອນທີ່ມີ ອາຍຸ 5 ປີຂຶ້ນ ໄປ** (ໃນ 7 ມື້ຜ່ານມາ).

**ໃນພາກນີ້ ແມ່ນຈະຖາມກ່ຽວກັບການເຄື່ອນໄຫວກິດຈະກຳເສດຖະກິດ ຂອງສະມາຊິກຄົວເຮືອນ ໃນ 7 ມື້ຜ່ານມາ, ສຳລັບສະມາຊິກຄົວເຮືອນທີ່ມີອາຍຸ 5 ປີຂຶ້ນໄປ ຈິ່ງຖາມໃນພາກນີ້.**

***ສິ່ງທີ່ຄວນເອົາໃຈໃສ ສຳລັບພາກນີ້ ແມ່ນຈະຕ້ອງຂຽນເລກທີບຸກຄົນທີ່ມີອາຍຸ 5 ປີຂຶ້ນໄປ ໃຫ້ກວດ ເບິ່ງ ພາກທີ 1 ຂໍ້ມູນກ່ຽວກັບສະມາຊິກຄົວເຮືອນໝົດທຸກຄົນ ໃນຄຳຖາມ HL1 ໃສ່.***

| | |
|---|---|
| ຄຳຖາມ AC1 | ໃນ 7 ມື້ຜ່ານມາ ທ່ານໄດ້ເຮັດວຽກໃດໜຶ່ງບໍ ທີ່ເປັນການສ້າງລາຍຮັບໃຫ້ຄົວເຮືອນ, ຢ່າງໜ້ອຍ 1 ຊົ່ວໂມງ ອາດໄດ້ຮັບເປັນເງິນສົດ ຫຼື ບໍ່ກໍຕາມ ? ໃນຄຳຖາມນີ້ແມ່ນຢາກຮູ້ກ່ຽວກັບກິດຈະກຳ ທີ່ບຸກຄົນດັ່ງກ່າວໄດ້ເຮັດໃນ 7 ມື້ຜ່ານມາ ທີ່ເປັນການສ້າງລາຍຮັບໃຫ້ຄົວເຮືອນ ຢ່າງໜ້ອຍ 1 ຊົ່ວ ໂມງໃນ 7 ມື້ຜ່ານມານີ້ເຊັ່ນ: ພະນັກງານ, ຄ້າຂາຍ, ບໍລິການ, ທຸລະກິດຂອງຕົນເອງ, ເຮັດວຽກໃຫ້ຕົນເອງ, ນາຍຈ້າງ ແລະ ເຮັດວຽກໃຫ້ຄົວເຮືອນບໍ່ໄດ້ຮັບຄ່າຈ້າງ...ການຈົດກ່າຍພຽງຂີດວົງມົນອ້ອມລະຫັດຄຳຕອບໃຫ້ເລືອກ ທີ່ຖືກຕ້ອງຕາມຄຳຈອບຂອງຜູ້ໃຫ້ສຳພາດ 1= ໄດ້ເຮັດ, ແລ້ວຂ້າມໄປຖາມຄຳຖາມ AC3; 2= ບໍ່ໄດ້ເຮັດ |
| ຄຳຖາມAC2 | ເຖິງວ່າ ໃນ 7 ມື້ ຜ່ານມາບໍ່ໄດ້ເຮັດວຽກທີ່ເປັນກິດຈະກຳທາງດ້ານເສດຖະກິດ, ສ້າງລາຍຮັບໃຫ້ຄົວເຮືອນກໍຕາມ ທ່ານໄດ້ເຮັດວຽກອື່ນບໍ ? ເປັນຕົ້ນແມ່ນກິດຈະກຳທີ່ບໍ່ໄດ້ສ້າງລາຍຮັບລາຍໄດ້ໃຫ້ແກ່ຄົວເຮືອນເຊັ່ນ: ການກະກຽມປຸງແຕ່ງອາຫານ, ການລ້າງ, ການຊັກລີດເສື້ອຜ້າ, ການອອກຕະຫລາດ, ການປົວລະບັດຮັກສາຄົນໄຂ້, ເບິ່ງແຍງຄົນແກ່ ຫຼື ເດັກນ້ອຍໃນຄົວເຮືອນ, ການອະນາໄມ, ຮັກສາທີ່ຢູ່ອາໃສ, ການທຳຄວາມສະອາດ, ສ້ອມແປງເຄື່ອງໃຊ້ສອຍໃນຄົວເຮືອນເອງ ແລະການຫາຟືນ... *(ບໍ່ກວມເອົາບຸກຄົນທີ່ໄດ້ຮັບຄ່າຈ້າງໃນວຽກດັ່ງກ່າວເຊັ່ນ: ອານາໄມເຮືອນບຸກຄົນອື່ນທີ່ໄດ້ຮັບຄ່າຈ້າງ ຫຼື ສິ່ງຕອບແທນ, ແຕ່ງກິນສຳລັບຂາຍ...).* |

**ວິທີຈົດກ່າຍຄຳຕອບສຳລັບຄຳຖາມນີ້:**

ແມ່ນຈົດກ່າຍເອົາລະຫັດອາຊີບ ຂອງສະມາຊິກຄົວເຮືອນທີ່ມີອາຍຸ 5 ປີຂຶ້ນໄປກ່ຽວກັບວຽກຕົ້ນຕໍຂອງເຂົາເຈົ້າໃນ 7 ມື້ຜ່ານມານີ້ ແລະໃຫ້ຈົດກ່າຍຄຳຕອບໃຫ້ຖືກຕ້ອງ ໂດຍອີງຕາມລະຫັດຂອງອາຊີບທີ່ມີໄວ້ໃຫ້ ຢູ່ໃນແບບສອບຖາມຄົວເຮືອນ ຊຶ່ງລະຫັດດັ່ງກ່າວແມ່ນມີແຕ່ 1 ຫາ 12 ແລະນິຍາມຂອງແຕ່ລະອາຊີບແມ່ນມີດັ່ງນີ້:

| | |
|---|---|
| 1. ພະນັກງານລັດ | ຫມາຍເຖິງ ຜູ້ທີ່ເຮັດວຽກໃນພາກສ່ວນຂອງລັດຖະບານ ແລະ ແມ່ນລັດເປັນຜູ້ເບີກ ຈ່າຍເງິນເດືອນໃຫ້ ຕົວຢ່າງ: ພະນັກງານເມືອງ, ພະນັກງານຄູສອນ, ທະຫານ, ຕຳ ຫຼວດ , ທ່ານ ຫມໍ ແລະ ອື່ນໆ |
| 2. ຜູ້ອອກແຮງງານໃຫ້ວິສາຫະກິດປະສົມ | ຫມາຍເຖິງ ຜູ້ອອກແຮງງານທີ່ເຮັດວຽກນຳ ບັນດາຫົວຫນ້າທຸລະກິດປະສົມລະ ຫວ່າງລັດ ແລະເອກະຊົນ ຕົວຢ່າງ: ພະນັກງານລັດວິສະຫະກິດປະສົມລາວໂທລະຄົມມະນາຄົມ |
| 3. ຜູ້ອອກແຮງງານໃຫ້ເອກະຊົນ | ຫມາຍເຖິງຜູ້ທີ່ເຮັດວຽກໃຫ້ຜູ້ໃຊ້ແຮງງານ(ນາຍຈ້າງ) ແລະ ໄດ້ຮັບຄ່າແຮງງານເປັນເງິນເດືອນ, ບຳເນັດ, ເບັ້ຍມື້ ຫຼືໄດ້ຮັບຄ່າແຮງງານຕາມວຽກທີ່ມີເປັນບາງຄັ້ງຄາວ ຫຼື |

| | |
|---|---|
| | ວັດຖຸຕ່າງໆຈາກນາຍຈ້າງ ຫຼື ຜູ້ໃຊ້ແຮງງານ ຕົວຢ່າງ: ພະນັກງານຂອງໂຮງງານຕັດຫຍິບ, ບໍລິສັດ, ຫ້າງຮ້ານຕ່າງໆ. |
| 4. ຜູ້ອອກແຮງງານໃຫ້ລັດວິສາຫະກິດ | ຫມາຍເຖິງ ຜູ້ທີ່ເຮັດວຽກ ແລະ ໄດ້ຮັບເງິນເດືອນຢູ່ໃນບັນດາຫົວຫນ່ວຍທຸລະກິດຂອງລັດວິສະຫະກິດ ຕົວຢ່າງ: ພະນັກງານຂອງບໍລິສັດການບິນລາວ, ບໍລິສັດໄຟ ຟ້າລາວ, ບໍລິສັດໄປສະນີລາວ, ບໍລິສັດນ້ຳປະປາລາວ... |
| 5. ຜູ້ໃຊ້ແຮງງານ (ນາຍຈ້າງ) | ຫມາຍເຖິງ ບຸກຄົນທີ່ດຳເນີນການທຸລະກິດຂອງຕົນເອງ ຫຼື ວິຊາຊີບໃດໜຶ່ງທີ່ ບໍ່ຂຶ້ນກັບໃຜ ແລະໄດ້ວ່າຈ້າງຜູ້ອອກແຮງງານ ໃຫ້ເປັນຈຳນວນໜຶ່ງຄົນຂຶ້ນໄປ.ຕົວຢ່າງ: ຜູ້ຂາຍເຄື່ອງແຫ້ງ, ຂາຍເຄື່ອງກໍ່ສ້າງ, ເຈົ້າຂອງຮ້ານເສີມສວຍ, ເຈົ້າຂອງ ຮ້ານກິນດື່ມ,... |
| 6. ເຮັດວຽກໃຫ້ຕົນເອງ | ຫມາຍເຖິງ ຜູ້ທີ່ເຮັດວຽກທຸລະກິດການຜະລິດຂອງຕົນເອງສຳລັບ ການຊົມໃຊ້ຂອງຕົນເອງ ຫຼື ເພື່ອຜົນກຳໄລແຕ່ບໍ່ໄດ້ວ່າຈ້າງ ຜູ້ອອກແຮງງານເຮັດວຽກໃຫ້ຕົນ. ຕົວຢ່າງ: ຊາວນາ, ພໍ່ຄ້ານ້ອຍ, ຊ່າງໄມ້, ຊ່າງຕ່ຳຫູກ, ຈັກສານ... |
| 7. ຜູ້ທີ່ເຮັດວຽກໃຫ້ຄອບຄົວບໍ່ໄດ້ຄ່າຈ້າງ | ຫມາຍເຖິງ ບັນດາສະມາຊິກຂອງຄົວເຮືອນ ທີ່ເຮັດວຽກຊ່ວຍທຸລະກິດ, ການກະສິກຳ ຫຼື ກິດຈະກຳໃດໜຶ່ງຂອງຄົວເຮືອນໂດຍ ບໍ່ໄດ້ຮັບຄ່າຈ້າງ ຫຼື ຜົນຕອບແທນ. |
| 8. ຜູ້ຫວ່າງງານ(ຫຼືຜູ້ທີ່ກຳລັງຊອກຫາວຽກເຮັດ) | ຫມາຍເຖິງ ບຸກຄົນທີ່ບໍ່ມີວຽກເຮັດ, ສາມາດເຮັດວຽກໄດ້ແຕ່ບໍ່ມີວຽກເຮັດ, ຫຼື ກຳລັງຊອກຫາວຽກເຮັດ. |
| 9. ນັກຮຽນ | ຫມາຍເຖິງ ບຸກຄົນທີ່ເຂົ້າຮຽນປົກກະຕິ ຢູ່ໃນໂຮງຮຽນ, ສະຖາບັນການສຶກສາພາກລັດ ຫຼື ເອກະຊົນ. ລາວຈະຕ້ອງເປັນນັກຮຽນທີ່ຮຽນເຕັມເວລາຂອງມື້ໜຶ່ງ ຫຼື ອາດສ່ວນໃດໜຶ່ງຂອງມື້ ແລະ ປົກກະຕິແລ້ວແມ່ນບໍ່ໄດ້ປະກອບສ່ວນເຂົ້າໃນກິດຈະກຳວຽກງານເສດຖະກິດ. ເຊັ່ນວ່າ: ການເຮັດວຽກງານ ຫຼື ການເປັນ ພະນັກງານສັງກັດຢູ່ບ່ອນ ໃດ ໜຶ່ງ. |
| 10. ພໍ່ເຮືອນ/ແມ່ເຮືອນ | ຫມາຍເຖິງ ຜູ້ເຮັດວຽກ, ອາດນັບທັງແມ່ຍິງ ແລະຜູ້ຊາຍທີ່ເຮັດວຽກບ້ານການເຮືອນໃນຄົວເຮືອນຂອງຕົນເອງ ແລະ ບໍ່ໄດ້ເຮັດ ເພື່ອຄ່າຈ້າງຫຼືກຳໄລ ຖ້າຫາກບຸກຄົນເຮັດວຽກ ໃນທຸລະກິດ ຂອງຄົວເຮືອນລາວຈະຕ້ອງຖືກຈົດກ່າຍເປັນປະເພດເຮັດວຽກໃຫ້ຕົນ ເອງ ຫຼື ເຮັດວຽກໃຫ້ຄົວເຮືອນໂດຍບໍ່ມີຄ່າຈ້າງ ***ສ່ວນຜູ້ທີ່ເຮັດວຽກບ້ານການເຮືອນ ເພື່ອຄ່າ ຈ້າງບໍ່ໃຫ້ຈົດເຂົ້າໃນປະເພດນີ້ໃຫ້ຈັດຢູ່ໃນປະເພດຜູ້ອອກແຮງງານໃນພາກເອກກະຊົນ.*** |
| 11. ບຳນານ/ປ່ວຍ/ເຖົ້າແກ່ | ຫມາຍເຖິງ ຜູ້ທີ່ບອກວ່າໃນ 7 ມື້ຜ່ານມາ ລາວບໍ່ໄດ້ເຮັດວຽກກິດຈະກຳເສດຖະກິດຫຍັງຫມົດ ຍ້ອນວ່າລາວໄດ້ບຳນານແລ້ວ ຫຼື ເນື່ອງຈາກວ່າລາວເຖົ້າແກ່, ເຈັບເປັນ ຫຼື ສະມັກໃຈພັກຜ່ອນຈາກວຽກງານ. |
| 12. ອື່ນໆ | ແມ່ນບັນດາຄົນລາວທີ່ເຮັດວຽກຕາມສະຖານທູດ ແລະ ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນັກໂທດ, ນັກບວດ, ນາຍບ້ານ, ບຸກຄົນທີ່ເປັນໂລກຈິດ, |
| **ສຳລັບຜູ້ບໍ່ຮູ້ອາຊີບຂອງຕົນແມ່ນ ໃຫ້ຫມາຍຄຳຕອບລະຫັດ “99”.** | |
| ຄຳຖາມAC3 | ວຽກຕົ້ນຕໍ ຂອງທ່ານໃນ 7 ມື້ຜ່ານມາແມ່ນຫຍັງ ? ແມ່ນໃຫ້ບອກວຽກຕົ້ນຕໍຂອງສະມາຊິກຄົວ |

| | |
|---|---|
| | ເຮືອນໃນ 7 ມື້ຜ່ານມາທີ່ໄດ້ເຮັດເປັນປົກກະຕິ ເພື່ອຮູ້ເຖິງສະພາບ ການມີວຽກເຮັດງານທຳຂອງສະມາຊິກຄົວເຮືອນ ຊຶ່ງສາມາດຮູ້ກ່ຽວກັບກຳລັງແຮງງານ, ການຫວ່າງງານ ແລະອັດຕາສ່ວນຂອງພົນລະເມືອງທີ່ຢູ່ນອກກຳລັງແຮງງານ ໃຫ້ໝາຍເອົາລະຫັດຄຳຕອບໃນຄຳຖາມ AC3. |
| ຄຳຖາມ AC4 | ອາຊີບຕົ້ນຕໍທີ່ ທ່ານເຮັດໃນ 7 ມື້ຜ່ານມາແມ່ນຫຍັງ ? ຄຳຖາມນີ້ ແມ່ນເພື່ອ ເກັບກຳກ່ຽວກັບວຽກຕົ້ນຕໍ ທີ່ບຸກຄົນໜຶ່ງໄດ້ເຮັດ ໃນໄລຍະ 7 ມື້ຜ່ານມາ. *ຄຳຖາມນີ້ ຈະຕ້ອງຖາມທຸກ ຄົນທີ່ໄດ້ຕອບຢູ່ໃນລະຫັດ 1 ຫາ 7 ໃນຄຳຖາມ AC3, ສຳລັບຜູ້ຕອບລະຫັດ 8 ຫາ 12 ແມ່ນຈະບໍ່ໃຫ້ຖາມຄຳຖາມAC4, AC5.*<br>ຕົວຢ່າງ: ໃນກໍລະນີທັງເປັນພະນັກງານ ແລະຂາຍເລກ , ອາຊີບຕົ້ນຕໍ ຂອງລາວຕ້ອງຖື ເອົາພະນັກງານທີ່ເປັນອາຊີບຕົ້ນຕໍ ໃນຊີວິດປະຈຳວັນຂອງລາວ ຫຼື ຖືເອົາໜ້າວຽກທີ່ມີຈຳນວນຊົ່ວໂມງເຮັດວຽກຫຼາຍກວ່າໝູ່ເປັນອາຊີບຕົ້ນຕໍ. |
| ຄຳຖາມ AC5 | ກິດຈະກຳຕົ້ນຕໍ (ຂະແໜງການເສດຖະກິດ) ຂອງສະຖານທີ່ ບ່ອນທ່ານເຮັດວຽກນຳ ໃນ 7 ມື້ຜ່ານມາແມ່ນຫຍັງ ? ແມ່ນ ຂະແໜງເສດຖະກິດຂອງວຽກທີ່ບຸກຄົນໄດ້ເຮັດໃນ 7 ມື້ຜ່ານມາ ຕົວຢ່າງ: ທ ກໍ່າ ເປັນພະນັກງານບັນຊີ ຢູ່ບໍລິສັດສຸພະພອນຂາຍເຄື່ອງກໍ່ສ້າງ, ໃນຕົວຢ່າງສະແດງໃຫ້ເຫັນວ່າ: ໜ້າວຽກຕົ້ນຕໍຂອງ ທ ກໍ່າແມ່ນ ພະນັກງານບັນຊີ ແລະຂະແໜງເສດຖະກິດຂອງລາວແມ່ນ ບໍລິສັດຂາຍເຄື່ອງກໍ່ສ້າງ. |

**ຕົວຢ່າງ: ວິທີຈົດກ່າຍລະຫັດຄຳຕອບສຳລັບອາຊີບ, ວຽກສະເພາະ ແລະກິດຈະກຳ.**

| ວຽກຕົ້ນຕໍທີ່ທ່ານເຮັດໃນ 7 ມື້ຜ່ານມາແມ່ນຫຍັງ ? (ໃຫ້ບັນທຶກລະຫັດຄຳຕອບຢູ່ຂ້າງເທິງ) | ວຽກສະເພາະຕົ້ນຕໍ ຂອງທ່ານໃນ 7 ມື້ຜ່ານມາແມ່ນຫຍັງ? *(ສຳລັບຜູ້ທີ່ຕອບລະຫັດ 1 ຫາ 7 ໃນຄຳຖາມ AC3)* *(ສຳລັບລະຫັດ ISCO ແມ່ນນັກວາດກາພາກສະໜາມຈະເປັນຜູ້ໃສ່)* | | ກິດຈະກຳຕົ້ນຕໍ (ຂະແໜງການເສດຖະ ກິດ) ຂອງສະຖານທີ່ ບ່ອນທ່ານເຮັດວຽກນຳ ໃນ7ມື້ຜ່ານມາແມ່ນຫຍັງ? *(ສຳລັບລະຫັດ ISIC ແມ່ນນັກວາດກາພາກ ສະໜາມຈະເປັນຜູ້ໃສ່)* | |
|---|---|---|---|---|
| AC3 | AC4 | ISCO | AC5 | ISIC |
| 3 | ບັນຊີສາງເຄື່ອງ | | ບໍລິສັດຕັດຫຍິບເສື້ອຜ້າ | |
| 3 | ຊ່າງໄຟຟ້າ | | ບໍລິສັດຕັດຫຍິບເສື້ອຜ້າ | |
| 3 | ອານາໄມ | | ອານາໄມເຮືອນພັກ | |
| 6 | ຄ້າຂາຍ | | ຂາຍຜັກຢູ່ຕະຫລາດ | |
| 6 | ຄ້າຂາຍ | | ຂາຍເສື້ອຜ້າຢູ່ຕະຫລາດ | |
| 6 | ຄ້າຂາຍ | | ຂາຍເຄື່ອງອາໄລ່ລົດຈັກຢູ່ເຮືອນ | |
| 4 | ອອກແບບຕະຄາຍໄຟຟ້າ | | ບໍລິສັດໄຟຟ້າລາວ | |
| 4 | ຕິດຕັ້ງໄຟຟ້າ | | ບໍລິສັດໄຟຟ້າລາວ | |
| 1 | ຄູສອນປະຖົມ | | ສອນຢູ່ໂຮງຮຽນປະຖົມ | |
| 1 | ພະນັກງານຂັບລົດ | | ຫ້ອງວ່າການເມືອງ | |
| 1 | ວິຊາການສະຖິຕິ | | ກົມສະຖິຕິ | |

| | | | | |
